ສງງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-08 ມິຖຸນາ 2024
ປີທີ 13
ສະບັບທີ 972
ລາຍສັປະດາ

## ສະຫາຍ ປອ. ໄຊສົມພອນ ພົມວິຫານ ຕ້ອນຮັບຮອງປະທານສະພາຜູ້ແທນປະຊາຊົນທົ່ວປະເທດຈີນ



(ສພຊ) - ວັນທີ 27 ພຶດສະພາຜ່ານມາ, ສະຫາຍ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງສະຫາຍ ສູຍເຄີລາຍທີ ຈາເຄີເອີ ຮອງປະທານສະພາຜູ້ແທນປະຊາຊົນທົ່ວປະເທດ ແຫ່ງ ສປ ຈີນ ພ້ອມດ້ວຍຄະນະ ໃນໂອກາດທີ່ເດີນທາງມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ ລະຫວ່າງວັນທີ24-28ພຶດສະພາ2024.

ສະຫາຍ ປອ. ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຍິນດີເປັນຢ່າງຍິ່ງທີ່ໄດ້ຕ້ອນຮັບສະຫາຍ ສູຍເຄີລາຍທີ ຈາເຄີເອີ ທີ່ມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ຄັ້ງທຳອິດ ທັງເປັນຄັ້ງທຳອິດຂອງຄະນະຜູ້ແທນຂັ້ນສູງຈາກສະພາຜູ້ແທນປະຊາຊົນທົ່ວປະເທດຈີນທີ່ມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ພາຍຫຼັງສະພາບການລະບາດຂອງພະຍາດໂຄວິດ-19 ເຊິ່ງເປັນການຈັດຕັ້ງຜັນຂະຫຍາຍເນື້ອໃນຈິດໃຈຂໍ້ຕົກລົງວ່າດ້ວຍການຮ່ວມມືລະຫວ່າງສະພາແຫ່ງຊາດລາວ ແລະ ສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ທີ່ໄດ້ລົງນາມຮ່ວມກັນໃນເດືອນກັນຍາ 2023 ທັງເປັນການປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ຄູ່ຮ່ວມຍຸດທະສາດຮອບດ້ານໝັ້ນຄົງ ຍາວນານ ຕາມທິດ 4 ດີ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ແລະ ການເປັນຄູ່ຮ່ວມຊາຕາກຳສັງຄົມນິຍົມ ລາວ-ຈີນ, ຈີນ-ລາວ ໃຫ້ນັບມື້ນັບຂະຫຍາຍຕົວ ແລະ

ອ່ານຕໍ່ໜ້າ 4

## ເຜີຍແຜ່ເອກະສານສຳຄັນຂອງພັກ ແລະ ສະຫຼຸບການສ້າງພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ



(ສພຊ) - ໃນຕອນບ່າຍຂອງວັນທີ23ພຶດສະພາ2024 ຄະນະພັກສະພາແຫ່ງຊາດ(ສພຊ) ໄດ້ຈັດກອງປະຊຸມເຜີຍແຜ່ເຊື່ອມຊຶມ ແລະ ຜັນຂະຫຍາຍເອກະສານສຳຄັນຂອງພັກ ແລະ ສະຫຼຸບຕີລາຄາການສ້າງພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2023 ແລະ ວາງທິດທາງແຜນການເຄື່ອນໄຫວປີ2024 ຂອງອົງຄະນະພັກສະພາແຫ່ງ

ອ່ານຕໍ່ໜ້າ 12

## ຮອງປະທານສະພານຫ່ງຊາດ ຕ້ອນຮັບປະທານຄະນະມິດຕະພາບລັດຖະສະພາ ຝຣັ່ງ-ກຳປູເຈຍ ແລະ ລາວ



(ສພຊ) - ວັນທີ 23 ພຶດສະພາ 2024, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການຢ້ຽມຂ່ຳນັບຂອງທ່ານ ແວັງຊັອງ ເອແປ ປະທານຄະນະມິດຕະພາບລັດຖະສະພາ ຝຣັ່ງ-ກຳປູເຈຍ ແລະ ລາວ, ສະພາສູງແຫ່ງ ສ.ຝຣັ່ງ ພ້ອມດ້ວຍຄະນະ ໃນໂອກາດທີ່ເດີນທາງມາຢ້ຽມຢາມແລະເຮັດວຽກຢູ່ສປປລາວ.

ໃນການພົບປະ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ສະແດງຄວາມຍິນດີຕ້ອນຮັບ

ອ່ານຕໍ່ໜ້າ 4

## ຄະນະຜູ້ແທນສະພາຜູ້ແທນປະຊາຊົນທົ່ວປະເທດ ຈີນ ຢ້ຽມຢາມ ແລະ ເຮັດວຽກງານຢູ່ ສປປລາວ



(ສພຊ) - ໃນລະຫວ່າງວັນທີ24-28ພຶດສະພາ2024 ຄະນະຜູ້ແທນສະພາຜູ້ແທນປະຊາຊົນທົ່ວປະເທດແຫ່ງສປຈີນ ນຳໂດຍສະຫາຍ ສູຍເຄີລາຍທີ ຈາເຄີເອີ ຮອງປະທານສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ໄດ້ມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ; ການຢ້ຽມຢາມດັ່ງກ່າວ ເປັນການເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ຄູ່ຮ່ວມຍຸດທະສາດຮອບດ້ານ ໝັ້ນຄົງ ຍາວນານ ຕາມທິດ 4 ດີ ແລະ ການເປັນຄູ່ຮ່ວມຊາຕາກຳສັງຄົມນິຍົມ ລາວ-ຈີນ, ຈີນ-ລາວ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ຈີນເວົ້າລວມ, ເວົ້າສະເພາະ ເປັນການຈັດຕັ້ງຜັນຂະຫຍາຍຂໍ້ຕົກລົງການຮ່ວມມືລະຫວ່າງສະພາແຫ່ງຊາດລາວ ແລະ ສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ໃຫ້ນັບມື້ນັບເຂົ້າສູ່ລວງເລິກແລະເປັນຮູບປະທຳຍິ່ງໆຂຶ້ນ.

ວັນທີ 27 ພຶດສະພາ, ຮອງປະທານສະພາຜູ້ແທນປະ

ອ່ານຕໍ່ໜ້າ 11

## ເຝິກອົບຮົມວຽກງານສາຍດ່ວນ 156

(ສພຊ) - ກອງປະຊຸມເຝິກອົບຮົມວຽກງານສາຍດ່ວນໃຫ້ແກ່ພະນັກງານສະພາແຫ່ງຊາດ (ສພຊ) ແລະ ສະພາປະຊາຊົນແຂວງ (ສພຂ) ໄດ້ຈັດຂຶ້ນໃນລະຫວ່າງວັນທີ 23-25 ພຶດສະພາ 2024 ຢູ່ເມືອງວຽງຄຳ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ນາງ ອຳໄພ ວອນລ້ອມບຸນແພງກຳມະການສຳຮອງສູນກາງພັກ,ເລຂາທິການ

ອ່ານຕໍ່ໜ້າ 6






ຢ່າໃຫ້ທຳມະຊາດລົງໂທດ (ໜ້າ 7)


ປະໂຫຍດຂອງ... (ໜ້າ 9)


ລັດຖະສະພາ... (ໜ້າ 10)

ລະວັງຕົກເປັນເຫຍື່ອ... (ໜ້າ 12)


## ຊົມເຊີຍວັນເດັກນ້ອຍສາກົນ ແລະ ວັນປູກຕົ້ນໄມ້ແຫ່ງຊາດ ຢ່າງສຸດໃຈ!

# ເຜີຍແຜ່ກົດໝາຍການແກ້ໄຂຄໍາຮ້ອງທຸກ ສະບັບປັບປຸງ ຢູ່ 4 ແຂວງພາກໃຕ້



(ສພຊ) - ໃນລະຫວ່າງ ວັນທີ 19-24 ພຶດສະພາ 2024 ທ່ານ ຄໍາແພງ ວິລະພັນ ຄະນະປະຈໍາສະພາແຫ່ງຊາດ, ປະທານກໍາມາທິການຍຸຕິທໍາ ພ້ອມດ້ວຍຄະນະ ໄດ້ລົງເຄື່ອນໄຫວເຜີຍແຜ່ກົດໝາຍວ່າດ້ວຍການແກ້ໄຂຄໍາຮ້ອງທຸກ ສະບັບປັບປຸງປີ 2022 ຢູ່ 4 ແຂວງພາກໃຕ້ ຄື: ຈໍາປາສັກ, ອັດຕະປື, ເຊກອງ ແລະ ສາລະວັນ ຈຸດປະສົງກໍເພື່ອຮັບປະກັນເຮັດໃຫ້ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການແກ້ໄຂຄໍາຮ້ອງທຸກ ຂອງບັນດາອົງການ, ພະແນກການ ແລະ ຂະແໜງການຕ່າງໆທີ່ຢູ່ຂັ້ນແຂວງ, ເມືອງ ແລະ ບ້ານ ໂດຍສະເພາະແມ່ນພະນັກງານ-ລັດຖະກອນທີ່ຮັບຜິດຊອບວຽກງານການແກ້ໄຂຄໍາຮ້ອງທຸກ ລວມໄປເຖິງພໍ່ແມ່ປະຊາຊົນບັນດາເຜົ່າໃນຂອບເຂດທົ່ວປະເທດ ໄດ້ຮັບຮູ້ ແລະ ເຂົ້າໃຈເນື້ອໃນຂອງກົດໝາຍດັ່ງກ່າວ ໃຫ້ມີຄວາມເປັນເອກະພາບກັນໃນການນໍາໃຊ້ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ ເພາະເນື້ອໃນກົດໝາຍສະບັບນີ້ ແມ່ນຕິດພັນກັບການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງທຸກອົງການຈັດຕັ້ງຂອງລັດ, ພາກສ່ວນທຸລະກິດ ລວມໄປເຖິງປະຊາຊົນລາວບັນດາເຜົ່າ.

ໃນໄລຍະປີ 2023 ກໍາມາທິການຍຸຕິທໍາ ໄດ້ຈັດຕັ້ງການເຜີຍແຜ່ກົດໝາຍວ່າດ້ວຍການແກ້ໄຂຄໍາຮ້ອງທຸກຢູ່ຂັ້ນສູນກາງ ແລະ 6 ແຂວງແລ້ວ ຄື: ຫຼວງນໍ້າທາ, ອຸດົມໄຊ, ຫຼວງພະບາງ, ບໍລິຄໍາໄຊ, ຄໍາມ່ວນ ແລະ ສະຫວັນນະເຂດ; ໂດຍຈະສືບຕໍ່ເຜີຍແຜ່ໃຫ້ທົ່ວເຖິງທຸກແຂວງທີ່ຍັງເຫຼືອໃນຂອບເຂດທົ່ວປະເທດໃຫ້ສໍາເລັດພາຍໃນປີນີ້.

ໃນໂອກາດດຽວກັນນັ້ນ, ກໍາມາທິການຍຸຕິທໍາ ຍັງໄດ້ມອບປຶ້ມກົດໝາຍວ່າດ້ວຍການແກ້ໄຂຄໍາຮ້ອງທຸກ, ແຜ່ນພັບ ແລະ ໂປສເຕີ ກ່ຽວກັບການຮັບ ແລະ ພິຈາລະນາຄໍາຮ້ອງຂໍຄວາມເປັນທໍາ ຈໍານວນໜຶ່ງ ໃຫ້ແກ່ສະພາປະຊາຊົນແຂວງ, ເມືອງ ແລະ ບ້ານ ເພື່ອເອົາໄປນໍາໃຊ້ເປັນບ່ອນອີງໃນການປະຕິບັດວຽກງານແລະເຜີຍແຜ່ໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງໄດ້ຮັບຮູ້.

ການລົງເຄື່ອນໄຫວເຜີຍແຜ່ກົດໝາຍຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ສົມທົບກັບງົບປະມານຂອງຄະນະເລຂາທິການສະພາແຫ່ງຊາດ.

# ຫາລືການກະກຽມເປັນເຈົ້າພາບ ກອງປະຊຸມ AIPACODD ຄັ້ງທີ 7



(ສພຊ) - ວັນທີ 24 ພຶດສະພາ 2024 ທີ່ສະພາແຫ່ງຊາດ, ຄະນະຮັບຜິດຊອບການເປັນເຈົ້າພາບກອງປະຊຸມສະພາທີ່ປຶກສາໄອປາ ກ່ຽວກັບໄພອັນຕະລາຍຂອງຢາເສບຕິດ (AIPACODD) ຄັ້ງທີ 7 ໄດ້ຈັດກອງປະຊຸມປຶກສາຫາລືກັນກ່ຽວກັບການກະກຽມຄວາມພ້ອມພາຍໃຕ້ການເປັນປະທານຂອງທ່ານ ສັນຍາ ປະເສີດ ປະທານກໍາມາທິການການຕ່າງປະເທດ, ຫົວໜ້າອະນຸກໍາມະການກອງເລຂາແຫ່ງຊາດໄອປາ-45; ໂດຍມີຄະນະຮັບຜິດຊອບຈາກກໍາມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ກໍາມາທິການວັດທະນະທໍາ-ສັງຄົມ, ກະຊວງປ້ອງກັນຄວາມສະຫງົບ ແລະ ພະນັກງານ-ວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ ລວມທັງໝົດຈໍານວນ 18 ທ່ານ.

ກອງປະຊຸມໄດ້ຮັບຟັງການນໍາສະເໜີກ່ຽວກັບຮູບແບບ ແລະ ລາຍງານກ່ຽວກັບການກະກຽມເປັນເຈົ້າພາບກອງປະຊຸມ AIPACODD ຄັ້ງທີ 7 ເຊິ່ງຈະຈັດຂຶ້ນພາຍໃຕ້ຫົວຂໍ້: "ເພີ່ມທະວີບົດບາດຂອງລັດຖະສະພາ ໃນການຮ່ວມມືເພື່ອແກ້ໄຂບັນຫາຢາເສບຕິດ ເຮັດໃຫ້ອາຊຽນປອດຢາເສບຕິດຢ່າງເປັນຮູບປະທໍາ" ຫຼັງຈາກນັ້ນ ຜູ້ເຂົ້າຮ່ວມໄດ້ປຶກສາຫາລືກັນກ່ຽວກັບການກະກຽມຮ່າງເນື້ອໃນຂອງກອງປະຊຸມດັ່ງກ່າວ ເພື່ອເຂົ້າຜ່ານກອງປະຊຸມຄະນະປະຈໍາສະພາແຫ່ງຊາດກ່ອນນໍາໄປພິຈາລະນາຮ່ວມກັບຄະນະຜູ້ແທນລັດຖະສະພາສະມາຊິກໄອປາ ໃນກອງປະຊຸມ AIPACODD ຄັ້ງທີ 7 ເຊິ່ງຈະຈັດຂຶ້ນໃນລະຫວ່າງວັນທີ 06-09 ສິງຫາ 2024 ທີ່ແຂວງຫຼວງພະບາງ; ນອກຈາກນັ້ນ, ໄດ້ປຶກສາຫາລືກັນກ່ຽວກັບຮູບແບບ ແລະ ກົນໄກການດໍາເນີນກອງປະຊຸມ ເພື່ອເປີດໃຫ້ຂະແໜງການກ່ຽວຂ້ອງໄດ້ມີການວາງສະແດງກິດຈະກໍາແລະການທັດສະນະສຶກສາ ກ່ຽວກັບວຽກງານຕ້ານຢາເສບຕິດຂອງ ສປປລາວ, ພ້ອມທັງມີທິດຊີ້ນໍາໃນການກະກຽມການເປັນເຈົ້າພາບກອງປະຊຸມ AIPACODD ຄັ້ງທີ 7 ໃຫ້ມີປະສິດທິຜົນ ແລະ ຜົນສໍາເລັດຢ່າງຈົບງາມ.

**(ກົມພົວພັນລັດຖະສະພາຫຼາຍຝ່າຍ, ກໍາມາທິການການຕ່າງປະເທດ)**

# ຄະນະຜູ້ແທນສະພາແຫ່ງຊາດ ເຂົ້າຮ່ວມກອງປະຊຸມ ເວທີປຶກສາຫາລືກ່ຽວກັບນໍ້າໂລກ ຄັ້ງທີ 10




(ສພຊ) - ໃນລະຫວ່າງ ວັນທີ 20-21 ພຶດສະພາ 2024 ຄະນະຜູ້ແທນສະພາແຫ່ງຊາດ ນໍາໂດຍທ່ານ ຄໍາມ່ວນ ຊຸມສີທາປັນຍາ ຮອງປະທານກໍາມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ໄດ້ເຂົ້າຮ່ວມກອງປະຊຸມເວທີປຶກສາຫາລືກ່ຽວກັບນໍ້າໂລກ ຄັ້ງທີ 10 ທີ່ບາຫຼີ, ປະເທດອິນໂດເນເຊຍ ເຊິ່ງຈັດຂຶ້ນພາຍໃຕ້ການຮ່ວມມືຂອງສະຫະພັນລັດຖະສະພາສາກົນ (IPU) ໂດຍສະພາຜູ້ແທນລາສະດອນອິນໂດເນເຊຍເປັນເຈົ້າພາບ; ມີຄະນະຜູ້ແທນສະມາຊິກ IPU ຈາກທົ່ວໂລກ, ອົງການລັດຖະສະພາຈາກພາກພື້ນຕ່າງໆ ແລະຊ່ຽວຊານດ້ານນໍ້າເຂົ້າຮ່ວມຢ່າງຫຼວງຫຼາຍ.

ເວທີປຶກສາຫາລືກ່ຽວກັບນໍ້າໂລກ ແມ່ນຈັດຂຶ້ນທຸກໆ 3 ປີ ເຊິ່ງຈະມີບຸກຄົນສໍາຄັນ ແລະ ຜູ້ທີ່ມີອໍານາດຕັດສິນໃຈກ່ຽວກັບການສົ່ງເສີມຄວາມຄືບໜ້າໃນການແກ້ໄຂບັນຫານໍ້າ ໂດຍສະເພາະແມ່ນສະມາຊິກລັດຖະສະພາຈາກທົ່ວໂລກ ເພື່ອປຶກສາຫາລືກັນກ່ຽວກັບການຊຸກຍູ້ທາງດ້ານນິຕິກໍາໃນການແກ້ໄຂບັນຫາການຂາດແຄນນໍ້າ, ເພີ່ມທະວີການຮ່ວມມື ແລະ ການທູດລັດຖະສະພາ ເພື່ອຂະຫຍາຍການເຂົ້າເຖິງນໍ້າທີ່ມີຄວາມປອດໄພ, ລະດົມການດໍາເນີນການກ່ຽວກັບນໍ້າເພື່ອຄວາມໝັ້ນຄົງ ແລະວັດທະນາຖາວອນຂອງໂລກ.

ກອງປະຊຸມຄັ້ງທີ 10 ນີ້, ຈັດຂຶ້ນພາຍໃຕ້ຫົວຂໍ້: "ຂັບເຄື່ອນການປະຕິບັດວຽກງານຂອງລັດຖະສະພາກ່ຽວກັບນໍ້າເພື່ອຄວາມຈະເລີນຮຸ່ງເຮືອງຮ່ວມກັນ" ເຊິ່ງໄດ້ຮ່ວມກັນປຶກສາຫາລືພາຍໃຕ້ 4 ບັນຫາສໍາຄັນຄື: 1) ການເຂົ້າເຖິງ ນໍ້າ ແລະ ສຸຂາພິບານ: ບັນຫາທີ່ຕ້ອງໄດ້ຮັບການແກ້ໄຂເພື່ອບັນລຸການພັດທະນາແບບຍືນຍົງ; 2) ແນວທາງປະຕິບັດດ້ານນະວັດຕະກໍາເພື່ອການເຂົ້າເຖິງນໍ້າຢ່າງທົ່ວເຖິງ ແລະ ເທົ່າທຽມ; 3) ນໍ້າຄືຫົວໃຈຂອງການດໍາເນີນງານດ້ານດິນຟ້າອາກາດ; 4) ການທູດ, ການຮ່ວມມື ແລະ ວິທະຍາສາດ ເພື່ອຄວາມໝັ້ນຄົງຂອງນໍ້າ.

ໃນກອງປະຊຸມປຶກສາຫາລືຄັ້ງນີ້, ທ່ານ ຄໍາມ່ວນ ຊຸມສີທາປັນຍາ ຫົວໜ້າຄະນະຜູ້ແທນລາວ ໄດ້ປະກອບຄໍາເຫັນໃນຫົວຂໍ້: "ນໍ້າຄືຫົວໃຈຂອງການດໍາເນີນງານດ້ານດິນຟ້າອາກາດ", ທ່ານໄດ້ຍົກໃຫ້ເຫັນເຖິງຄວາມອຸດົມສົມບູນຂອງນໍ້າໃນ ສປປ ລາວ, ບັນຫາການປ່ຽນແປງດິນຟ້າອາກາດທີ່ສົ່ງຜົນຕໍ່ການຄຸ້ມຄອງ-ການບໍລິຫານນໍ້າ ລວມໄປເຖິງນະໂຍບາຍກ່ຽວກັບນໍ້າຂອງ ສປປ ລາວ ເຊິ່ງສະພາແຫ່ງຊາດຊຸດທີ IX ໄດ້ຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX, ຮັບຮອງເອົາຍຸດທະສາດການຄຸ້ມຄອງ, ການນໍາໃຊ້ນໍ້າ ແລະ ຊັບພະຍາກອນນໍ້າ ແຫ່ງຊາດ 2030 ແລະ ວິໄສທັດ 2040 ທີ່ກໍານົດກ່ຽວກັບການບໍລິຫານ ແລະ ນໍາໃຊ້ນໍ້າແບບຍືນຍົງ, ສົ່ງເສີມການນໍາໃຊ້ພະລັງງານສະອາດ, ສົ່ງເສີມການນໍາໃຊ້ພະລັງງານນໍ້າ, ຫຼຸດຜ່ອນຜົນກະທົບຕໍ່ການປ່ຽນແປງດິນຟ້າອາກາດແນໃສ່ຮັບປະກັນການປ່ອຍອາຍພິດໃຫ້ເປັນສູນພາຍໃນປີ 2050 ຕາມທີ່ ສປປ ລາວ ຕັ້ງເປົ້າໝາຍໄວ້; ພ້ອມດຽວກັນນັ້ນ, ສະພາແຫ່ງຊາດຍັງໄດ້ເອົາໃຈໃສ່ຕິດຕາມກວດກາການຈັດຕັ້ງປະຕິບັດບັນດາກົດໝາຍ ແລະ ນະໂຍບາຍແຫ່ງຊາດ ໂດຍສະເພາະແມ່ນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍນໍ້າແລະຊັບພະຍາກອນນໍ້າເພື່ອຮັບປະກັນການນໍາໃຊ້ນໍ້າເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ໃຫ້ມີປະສິດທິພາບ, ປະສິດທິຜົນ, ທົ່ວເຖິງ, ເທົ່າທຽມ ແລະ ຍືນຍົງ. ໃນຕອນທ້າຍ, ຫົວໜ້າຄະນະຜູ້ແທນລາວ ໄດ້ຮຽກຮ້ອງໃຫ້ສະມາຊິກ IPU ເພີ່ມທະວີການຮ່ວມມືເຊິ່ງກັນ ແລະກັນທາງດ້ານນິຕິບັນຍັດ ເພື່ອຮັບປະກັນການນໍາໃຊ້ນໍ້າໃຫ້ມີຄວາມໝັ້ນຄົງ ແລະ ປອດໄພ, ຍົກສູງປະສິດທິພາບຂອງການຄຸ້ມຄອງ ແລະ ນໍາໃຊ້ນໍ້າ ທີ່ບໍ່ສົ່ງຜົນກະທົບຕໍ່ການປ່ຽນແປງດິນຟ້າອາກາດ, ນໍາໃຊ້ນໍ້າເຂົ້າໃນທຸກຂົງເຂດວຽກງານ, ສົ່ງເສີມການສ້າງກິດຈະກໍາ ແລະ ການແລກປ່ຽນທາງດ້ານເຕັກໂນໂລຊີ ທີ່ກ່ຽວຂ້ອງກັບການນໍາໃຊ້, ການບໍາບັດ ແລະ ການນໍານໍ້າກັບມາໃຊ້ໃໝ່ ແລະ ເລັ່ງລັດການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ ທີ 6 (SDG6) ໂດຍການສະໜັບສະໜູນທາງດ້ານທຶນຮອນໃຫ້ແກ່ປະເທດທີ່ດ້ອຍພັດທະນາ ແລະ ກໍາລັງພັດທະນາ ເພື່ອຄວາມຈະເລີນຮຸ່ງເຮືອງຮ່ວມກັນ.

ນອກຈາກນັ້ນ, ທ່ານ ສຈ. ປອ. ທອງຄໍາ ສຸວັນນະວົງ ສະມາຊິກສະພາແຫ່ງຊາດລາວ ຍັງໄດ້ເຂົ້າຮ່ວມ ແລະ ມີຄໍາເຫັນໃນກອງປະຊຸມສະພາທີ່ປຶກສາກ່ຽວກັບບັນຫານໍ້າຂອງສະພາແຫ່ງຊາດອາຊີຄັ້ງທີ 6 ອີກດ້ວຍ.

ກອງປະຊຸມຄັ້ງນີ້, ໄດ້ດໍາເນີນໄປໃນບັນຍາກາດທີ່ມີຄວາມເປັນເອກະພາບກັນ, ບັນດາຄະນະຜູ້ແທນໄດ້ເອົາໃຈ ໃສ່ປະກອບຄໍາຄິດຄໍາເຫັນຢ່າງສ້າງສັນ ໃນການສົ່ງເສີມການຮ່ວມມືທາງດ້ານນິຕິບັນຍັດ ເພື່ອຄຸ້ມຄອງ, ບໍລິຫານຈັດການ ແລະ ການນໍາໃຊ້ນໍ້າໃຫ້ພຽງພໍ, ມີປະສິດທິພາບ, ມີປະສິດທິຜົນ ແລະ ຍືນຍົງ. ກອງປະຊຸມເວທີປຶກສາຫາລືກ່ຽວກັບນໍ້າໂລກ ຄັ້ງທີ 11 ຈະຈັດຂຶ້ນໃນປີ 2027 ຫຼື ອີກສາມປີຕໍ່ໜ້າ.

**(ກົມພົວພັນລັດຖະສະພາຫຼາຍຝ່າຍ, ກໍາມາທິການການຕ່າງປະເທດ)**

# ທາບທາມຄຳເຫັນໃສ່ຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດ



(ສພຊ) - ເພື່ອເຮັດໃຫ້ວຽກງານຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ມີເນື້ອໃນຄົບຖ້ວນສົມບູນ, ສາມາດນຳໄປຈັດຕັ້ງປະຕິບັດມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ; ລະຫວ່າງວັນທີ 23-24 ພຶດສະພາ 2024 ທີ່ແຂວງວຽງຈັນ, ກຳມາທິການກົດໝາຍໄດ້ຈັດກອງປະຊຸມລະດົມແນວຄິດໃສ່ຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດ ແລະ ຮ່າງປຶ້ມຄູ່ມືກ່ຽວກັບການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພາຍໃຕ້ການເປັນປະທານຂອງທ່ານ ອຳໄພ ຈິດມານົນ ຮອງປະທານກຳມາທິການກົດໝາຍ ໂດຍມີບັນດາທ່ານຮອງປະທານ ແລະ ເລຂາທິການສະພາປະຊາຊົນແຂວງ, ນະຄອນຫຼວງ, ບັນດາທ່ານປະທານຄະນະກຳມະການຍຸຕິທຳແລະປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຫົວໜ້າຂະແໜງ, ພະນັກງານ-ລັດຖະກອນ ໃນ 6 ແຂວງ ຄື: ຫຼວງພະບາງ, ຊຽງຂວາງ, ວຽງຈັນ, ບໍລິຄຳໄຊ, ຄຳມ່ວນ ແລະ ໄຊສົມບູນ ພ້ອມດ້ວຍຄະນະກົມ ແລະ ພະນັກງານ-ລັດຖະກອນຈຳນວນໜຶ່ງຂອງກົມຕິດຕາມກວດກາ, ໂຄສະນາ ແລະ ຕີຄວາມໝາຍກົດໝາຍ ລວມຜູ້ເຂົ້າຮ່ວມທັງໝົດ 56 ທ່ານ ຍິງ 15 ທ່ານ.

ບັນດາຜູ້ເຂົ້າຮ່ວມໄດ້ພ້ອມກັນປະກອບຄຳເຫັນຢ່າງມີຈຸດສຸມ, ຫຼາກຫຼາຍທີ່ສອດຄ່ອງກັບການຈັດຕັ້ງປະ ຕິບັດຕົວຈິງຂອງສະພາປະຊາຊົນຂັ້ນແຂວງ (ສພຂ) ເພື່ອເຮັດໃຫ້ຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດ ແລະ ຮ່າງປຶ້ມຄູ່ມືດັ່ງກ່າວ ສາມາດນຳໄປຈັດຕັ້ງປະຕິບັດໃຫ້ມີຄວາມຊັດເຈນ, ຮັດກຸມ ແລະ ເອກະພາບຕໍ່ກັບວຽກງານດັ່ງກ່າວ ເຊິ່ງເປັນວຽກງານໜຶ່ງທີ່ມີຄວາມໝາຍ ແລະ ຄວາມສຳຄັນໃນການປະຕິບັດພາລະບົດບາດດ້ານການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ, ເຈົ້າຄອງນະຄອນ ຂອງ ສພຂ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກມູນນິທິ ເວສທ໌ມິນສ໌ເທີ ເພື່ອປະຊາທິປະໄຕ (Westminster Foundation for Democracy-WFD) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ສົມທົບກັບງົບປະມານຂອງຄະນະເລຂາທິການສະພາແຫ່ງຊາດ.

**(ກົມຕິດຕາມກວດກາ, ໂຄສະນາ ແລະ ຕີຄວາມໝາຍກົດໝາຍ)**

# ສຳເລັດກອງປະຊຸມໃຫຍ່ຄັ້ງທີ II ຂອງໜ່ວຍຊາວໜຸ່ມຮາກຖານ ກຜງສ



(ສພຊ) - ໜ່ວຍຊາວໜຸ່ມຮາກຖານກຳມາທິການແຜນການ, ການເງິນແລະການກວດສອບ (ກຜງສ) ດຳເນີນກອງປະຊຸມໃຫຍ່ຄັ້ງທີ II ໃນວັນທີ 27 ພຶດສະພາ 2024 ທີ່ສະພາແຫ່ງຊາດ (ສພຊ) ໂດຍການເປັນປະທານຮ່ວມຂອງສະຫາຍ ບຸນຕາ ເທບພະວົງ ກຳມະການສຳຮອງສູນກາງພັກ, ຄະນະພັກສະພາແຫ່ງຊາດ, ສະຫາຍ ພອນແກ້ວ ຕົ້ນວໍລະຈິດ ກຳມະການຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ເລຂາຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ ແລະ ສະຫາຍ ທິບທະວົງ ບຸດທະສະວົງ ເລຂາໜ່ວຍຊາວໜຸ່ມຮາກຖານ ກຜງສ; ມີບັນດາສະຫາຍຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ, ຕາງໜ້າໜ່ວຍຊາວໜຸ່ມຮາກຖານທົ່ວ ສພຊ ພ້ອມດ້ວຍສະມາຊິກຊາວໜຸ່ມພາຍໃນໜ່ວຍຮາກຖານດັ່ງກ່າວເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງການລາຍງານບົດສຳຫຼວດການນຳພາ ແລະ ພ້ອມກັນສະຫຼຸບຕີລາຄາ, ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການເມືອງຂອງໜ່ວຍຊາວໜຸ່ມຮາກຖານກຳມາທິການແຜນການ, ການເງິນ ແລະ ການກວດສອບ ເຊິ່ງໄດ້ຖືເອົາວຽກງານສຶກສາອົບຮົມການເມືອງ-ແນວຄິດ ເປັນວຽກງານໜຶ່ງທີ່ສຳຄັນ ໂດຍໄດ້ຊຸກຍູ້ສະມາຊິກຊາວໜຸ່ມ ເຂົ້າຮ່ວມຮັບຟັງການເຜີຍແຜ່ເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ມະຕິ, ຄຳສັ່ງ, ລະບຽບກົດໝາຍຂອງລັດ ແລະ ວັນສຳຄັນຕ່າງໆຂອງພັກ-ຂອງຊາດ ໃນແຕ່ລະໄລຍະຢ່າງປົກກະຕິ; ເອົາໃຈໃສ່ຢ່າງຕັ້ງໜ້າໃນການກໍ່ສ້າງສະມາຊິກຊາວໜຸ່ມທາງດ້ານການເມືອງ-ແນວຄິດ ແລະ ການຈັດຕັ້ງ, ປັບປຸງແບບແຜນວິທີເຮັດວຽກ ຕິດພັນກັບວຽກງານຕົວຈິງ, ຮ່ວມຊີວິດການເມືອງເປັນປະຈຳ ແລະ ເຂົ້າຮ່ວມວຽກງານຂະບວນການເພື່ອຂໍ່ານັບຮັບຕ້ອນສະເຫຼີມສະຫຼອງວັນສຳຄັນຕ່າງໆຂອງພັກ-ຂອງຊາດ ແລະ ວຽກງານອື່ນໆຢ່າງມີຜົນສຳເລັດ.

ກອງປະຊຸມໄດ້ຜ່ານຂໍ້ຕົກລົງບັ່ງຕົວແຕ່ງຕັ້ງເອົາສະຫາຍ ປອ. ສີວອນ ຣີວາຍບຸນທະວີ ເປັນເລຂາ, ສະຫາຍ ນາງ ແກ້ວມະນີ ສະກັນທອງ ເປັນຮອງເລຂາ ທັງເປັນປະທານກວດກາ, ສະຫາຍ ນາງ ຈັນສະໝອນ ບົວສະຫວັນ ເປັນກຳມະການ.

ໃນໂອກາດນີ້, ສະຫາຍ ບຸນຕາ ເທບພະວົງ ໄດ້ມີຄຳເຫັນໂອ້ລົມຕໍ່ທີ່ປະຊຸມ ເຊິ່ງໄດ້ສະແດງຄວາມຍ້ອງຍໍຊົມ ເຊີຍຜົນງານທີ່ຄະນະໜ່ວຍຊາວໜຸ່ມຮາກຖານກຳມາທິການແຜນການ, ການເງິນແລະການກວດສອບ ແລະ ສະມາຊິກຊາວໜຸ່ມພາຍໃນໜ່ວຍ ຍາດມາໄດ້ໃນໄລຍະຜ່ານມາ. ພ້ອມດຽວກັນນັ້ນ, ກໍໄດ້ເນັ້ນໜັກໃຫ້ຄະນະໜ່ວຍຊາວໜຸ່ມຮາກຖານຊຸດໃໝ່ກໍຄືສະມາຊິກຊາວໜຸ່ມທຸກສະຫາຍຕ້ອງກຳໃຫ້ແໜ້ນແລະເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ເພື່ອຫັນເປັນແຜນການ ແລະ ແຜນວຽກ ສິ່ງສຳຄັນຕ້ອງກຳແໜ້ນພາລະບົດບາດ, ສິດ ແລະ ໜ້າທີ່ຂອງຊາວໜຸ່ມ ເພື່ອຫັນເຂົ້າສູ່ລວງເລິກໃຫ້ນັບມື້ນັບຫຼາຍຂຶ້ນປະກອບສ່ວນຊ່ວຍສະໜັບສະໜູນວຽກງານລວມຂອງສະພາແຫ່ງຊາດ ໃຫ້ສຳເລັດຕາມການມອບໝາຍຂອງຂັ້ນເທິງ; ເພີ່ມທະວີວຽກງານສຶກສາອົບຮົມການເມືອງ-ແນວຄິດຂອງສະມາຊິກຊາວໜຸ່ມ ໃຫ້ມີຄວາມອຸ່ນອຽນທຸ່ນທ່ຽງ, ມີຄວາມຫ້າວຫັນ, ມີການປະດິດສ້າງໃໝ່ໃນການປະຕິບັດວຽກງານວິຊາສະເພາະ ສິ່ງສຳຄັນແມ່ນຕ້ອງມີຄວາມສາມັກຄີເປັນນ້ຳໜຶ່ງໃຈດຽວກັນເພື່ອພ້ອມກັນປະຕິບັດໜ້າທີ່ການເມືອງທີ່ໄດ້ຮັບມອບໝາຍ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ, ຖືເອົາການຕິຊົມຕົນເອງ ແລະ ຕິຊົມເຊິ່ງກັນແລະກັນ ເປັນກົນໄກໜຶ່ງໃນການກໍ່ສ້າງສະມາຊິກຊາວໜຸ່ມດ້ວຍກັນ; ເປັນກ້ອນກຳລັງນຳໜ້າໃນວຽກງານຂະບວນການຕ່າງໆຮ່ວມກັບອົງການຈັດຕັ້ງມະຫາຊົນອື່ນ ເພື່ອປັບປຸງໃຫ້ສອດຄ່ອງກັບລັກສະນະພິເສດ, ທີ່ຕັ້ງ ແລະ ພາລະບົດບາດຂອງສະພາແຫ່ງຊາດໃນໄລຍະໃໝ່; ເອົາໃຈໃສ່ຄົ້ນຄວ້າ ແລະ ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມທົ່ວປະເທດ ກໍຄືມະຕິກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມສະພາແຫ່ງຊາດໃນຕໍ່ໜ້າ ໃຫ້ບັນລຸຕາມຄາດໝາຍທີ່ກຳນົດໄວ້.

**(ນາງ ອາລິນ ສຸພົມມະປະດິດ)**

# ຕິດຕາມກວດກາ, ຊຸກຍູ້ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຢູ່ແຂວງອັດຕະປື



(ສພຊ) - ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໃຫ້ມີປະສິດທິພາບ ແລະບັນລຸຕາມຄາດໝາຍ, ໃນລະຫວ່າງວັນທີ 16-17 ພຶດສະພາ 2024 ທ່ານ ນາງ ທັດສະດາພອນ ຈັນທະມາດ ຮອງປະທານກຳມາທິການບັນດາເຜົ່າ ພ້ອມດ້ວຍຄະນະ ໄດ້ລົງເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຢູ່ແຂວງອັດຕະປື ໂດຍໄດ້ຈັດກອງປະຊຸມຮ່ວມກັບສະພາປະຊາຊົນແຂວງ (ສພຂ) ແລະ ພາກສ່ວນທີ່ກ່ຽວຂ້ອງຂອງແຂວງທີ່ສຳນັກງານ ສພຂ.

ທັງນີ້, ກໍເພື່ອຕິດຕາມກວດກາແລະຊຸກຍູ້ການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍຂອງບັນດາຂະແໜງການ ແລະ ອົງການທີ່ກ່ຽວຂ້ອງ ໂດຍສະເພາະດຳລັດ 348/ລບ, ລົງວັນທີ 16/11/2017 ວ່າດ້ວຍມາດຕະຖານພົ້ນທຸກແລະມາດຕະຖານພັດທະນາ; ເພື່ອເປັນຂໍ້ມູນພື້ນຖານກະກຽມລາຍງານຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ກໍຄືກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ທັງເປັນບ່ອນອີງໃນການປຶກສາຫາລືແລະສະເໜີພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າມາດຕະການແກ້ໄຂ.

ໃນກອງປະຊຸມ, ຜູ້ເຂົ້າຮ່ວມໄດ້ຮັບຟັງການລາຍງານຈາກພາກສ່ວນທີ່ກ່ຽວຂ້ອງກ່ຽວກັບການຈັດຕັ້ງປະຕິບັດບັນດາຄາດໝາຍຂອງວຽກງານພັດທະນາຊົນນະບົດແລະແກ້ໄຂຄວາມທຸກຍາກພາຍໃນແຂວງ; ການຈັດຕັ້ງປະຕິບັດບັນດາມາດຕະຖານຂອງຄາດໝາຍທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໂດຍເນັ້ນຜົນປະເມີນຕາມດຳລັດ 348/ລບ ແລະ ມະຕິ 82/ສພຊ, ລົງວັນທີ 30/12/2022 ແລະ ການແກ້ໄຂປາກົດການຫຍໍ້ທໍ້ທາງສາສະໜາ. ຈາກນັ້ນ, ທ່ານ ນາງ ທັດສະດາພອນ ຈັນທະມາດ ໄດ້ຕັ້ງຄຳຖາມເຈາະຈີ້ມເພື່ອໃຫ້ພາກສ່ວນກ່ຽວຂ້ອງ ອະທິບາຍໃຫ້ຂໍ້ມູນເພີ່ມຕື່ມ, ປະກອບຄວາມຄິດຄວາມເຫັນ ແລະ ຄຳສະເໜີຕ່າງໆຢ່າງກົງໄປກົງມາ ພ້ອມທັງມີຄຳເຫັນໂອ້ລົມເພື່ອເປັນທິດທາງໃນການປະຕິບັດວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ໃຫ້ມີຄວາມສະດວກ, ມີປະສິດທິພາບ ແລະ ປະສິດທິຜົນ.

ການເຄື່ອນໄຫວຄັ້ງນີ້, ຄະນະຂອງທ່ານຮອງປະທານກຳມາທິການບັນດາເຜົ່າ ແລະ ຄະນະຈາກສະພາປະຊາຊົນແຂວງ ໄດ້ໄປຢ້ຽມຊົມຈຸດສຸມພັດທະນາບ້ານສະແຄະ ເມືອງໄຊເສດຖາ ແລະ ບ້ານສົ້ມປ່ອຍ ເມືອງສະໜາມໄຊ.

**(ວິນັດ ສີສຸລາດ)**

# ຕິດຕາມກວດກາການຈັດຕັ້ງປະຕິບັດນະໂຍບາຍ, ນິຕິກຳ ທີ່ຕິດພັນກັບການຄ້າຊາຍແດນ ຢູ່ຄຳມ່ວນ ແລະ ສະຫວັນນະເຂດ




(ສພຊ) - ໃນລະຫວ່າງວັນທີ 19-23 ພຶດສະພາ 2024 ທ່ານ ມະນີໂສ ຊາມຸນຕີ ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ພ້ອມດ້ວຍຄະນະ ໄດ້ລົງເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະ ຕິບັດນະໂຍບາຍ, ນິຕິກຳທີ່ຕິດພັນກັບການນຳເຂົ້າ, ປຸງແຕ່ງນ້ຳມັນເຊື້ອໄຟ ເພື່ອສະໜອງການຊົມໃຊ້ພາຍໃນ, ການຄ້າຊາຍແດນ ແລະ ປັດໄຈການຜະລິດ ຢູ່ເມືອງທ່າແຂກ, ເມືອງເຊບັ້ງໄຟ ແຂວງຄຳມ່ວນ ແລະ ເມືອງອຸທຸມພອນ, ເມືອງຈຳພອນ ແຂວງສະຫວັນນະເຂດ.

ໂອກາດດັ່ງກ່າວ, ທ່ານຮອງປະທານ ກສຕສ ພ້ອມດ້ວຍຄະນະ ໄດ້ເຂົ້າພົບທ່ານຮອງເຈົ້າແຂວງໆແຂວງສະຫວັນນະເຂດ ເພື່ອລາຍງານຈຸດປະສົງໃນການເຄື່ອນໄຫວວຽກງານແລະຮ່ວມເຮັດວຽກກັບສະພາປະຊາຊົນແຂວງ (ສພຂ) ຄຳມ່ວນ ແລະ ສະຫວັນນະເຂດ. ຈາກນັ້ນ, ໄດ້ຈັດກອງປະຊຸມຮ່ວມກັບພະແນກການ, ຂະແໜງການທີ່ກ່ຽວຂ້ອງຂອງແຂວງ ແລະ ເມືອງ ໂດຍການເປັນປະທານຮ່ວມຂອງທ່ານມະນີໂສ ຊາມຸນຕີ ແລະ ຮອງປະທານ ສພຂ ຂອງສອງແຂວງ ເພື່ອຮັບຟັງການລາຍງານການຈັດຕັ້ງປະຕິບັດນະໂຍບາຍ ແລະ ນິຕິກຳທີ່ຕິດພັນກັບການນຳເຂົ້າ, ປຸງແຕ່ງນ້ຳມັນເຊື້ອໄຟ ເພື່ອສະໜອງການຊົມໃຊ້ພາຍໃນ, ການຄ້າຊາຍແດນ ແລະ ປັດໄຈການຜະລິດ ພ້ອມທັງສະພາບຂໍ້ສະດວກແລະຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 103/ຄປຈ, ລົງວັນທີ 09 ພຶດສະພາ 2022 ວ່າດ້ວຍການຮັບຮອງມາດຕະການຮັກສາສະຖຽນລະພາບຂອງລາຄານ້ຳມັນເຊື້ອໄຟໃນສະພາບລາຄາມີການເໜັງຕີງຂຶ້ນສູງ ໂດຍສະເພາະການຊຸກຍູ້ສົ່ງເສີມ ແລະ ຄຸ້ມຄອງການນຳເຂົ້າເພື່ອສະໜອງການຊົມໃຊ້ພາຍໃນປະເທດ, ຮັບປະກັນສະຖຽນລະພາບໃນການສະໜອງນ້ຳມັນເຊື້ອໄຟໃຫ້ມີຄວາມພຽງພໍ ແລະ ຕໍ່ເນື່ອງໃນຕໍ່ໜ້າ ແລະ ໄລຍະຍາວ, ຫຼີກລ່ຽງຄວາມສ່ຽງທີ່ຈະເກີດສະພາບຂາດແຄນນ້ຳມັນເຊື້ອໄຟ ແລະ ມີສະຖຽນລະພາບທາງດ້ານລາຄາ; ການຈັດຕັ້ງປະຕິບັດວຽກງານການຄ້າຊາຍແດນ ແລະ ການຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກສິນຄ້າຢູ່ດ່ານຊາຍແດນ, ກົນໄກການຈັດຕັ້ງປະຕິບັດການຊຳລະ /ຮັບຊຳລະ ຈາກການນຳເຂົ້າ-ສົ່ງອອກສິນຄ້າ ຮັບປະກັນການຕິດຕາມການຊຳລະຂອງບັນດາຫົວໜ່ວຍທຸລະກິດທີ່ເຮັດການຄ້າກັບຕ່າງປະເທດ ໃຫ້ເຂົ້າສູ່ລະບົບ ແລະ ສາມາດກວດສອບໄດ້; ການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກາງສະໄໝ 5 ປີ ຄັ້ງທີ IX (2021-2025) ແລະ ແຜນການທ້າຍສະໄໝຮອດປີ2025, ແຜນປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024 ສະບັບເລກທີ 119/ສພຊ, ລົງວັນທີ 21 ພະຈິກ 2023. ຫຼັງຈາກນັ້ນ, ໄດ້ແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາ ເພື່ອຊອກໃຫ້ເຫັນດ້ານດີທີ່ຄວນເສີມຂະຫຍາຍ ແລະ ດ້ານຂໍ້ຄົງຄ້າງ ທີ່ຕ້ອງໄດ້ຊອກຫາວິທີແກ້ໄຂ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ມີຄວາມຖືກຕ້ອງ, ສອດຄ່ອງກັບກົດໝາຍ ແລະ ບັນລຸຕາມຄາດໝາຍທີ່ວາງໄວ້.

ທ່ານ ມະນີໂສ ຊາມຸນຕີ ໃນນາມປະທານກອງປະຊຸມ ໄດ້ມີຄຳເຫັນຊີ້ນຳແຕ່ລະຂະແໜງການ ເພີ່ມທະວີ ແລະ ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານຂອງຕົນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນກວ່າເກົ່າ ເປັນຕົ້ນແມ່ນການຄຸ້ມຄອງການນຳເຂົ້າ, ຈຳໜ່າຍນ້ຳມັນເຊື້ອໄຟ ແລະ ການຊຳລະ: ມອບໃຫ້ພາກສ່ວນກ່ຽວຂ້ອງຂອງແຂວງ ປະສານສົມທົບກັບສູນກາງ, ເມືອງທີ່ມີດານຊາຍແດນຕິດກັບປະເທດເພື່ອບ້ານ ແລະ ຜູ້ປະກອບການເອົາໃຈໃສ່ຈັດຕັ້ງປະຕິບັດນະໂຍບາຍ ແລະ ນິຕິກຳທີ່ກ່ຽວຂ້ອງກັບການຄຸ້ມຄອງການນຳເຂົ້ານ້ຳມັນເຊື້ອໄຟ ແລະ ການສົ່ງເສີມການຜະລິດປຸງແຕ່ງນ້ຳມັນເຊື້ອໄຟພາຍໃນ, ການແຈກຢາຍນ້ຳມັນເຊື້ອໄຟເພື່ອສະໜອງການຊົມໃຊ້ພາຍໃນທ້ອງຖິ່ນ ພ້ອມທັງເອົາໃຈໃສ່ຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກສິນຄ້າ, ການຊຳລະ/ຮັບຊຳລະ ຈາກການນຳເຂົ້າ-ສົ່ງອອກຢູ່ດ່ານຊາຍແດນ; ການສົ່ງເສີມປັດໄຈການຜະລິດ ແລະ ການຜະລິດພາຍໃນເພື່ອຫຼຸດຜ່ອນການນຳເຂົ້າ: ມອບໃຫ້ພາກສ່ວນກ່ຽວຂ້ອງຂອງແຂວງປະສານສົມທົບກັບເມືອງທີ່ມີທ່າແຮງ, ສະຫະກອນ, ຜູ້ຜະລິດກະສິກຳ ແລະ ຊາວກະສິກອນ ເອົາໃຈໃສ່ຈັດຕັ້ງປະຕິບັດນະໂຍບາຍ ແລະ ນິຕິກຳໃຕ້ກົດໝາຍທີ່ຕິດພັນ ເພື່ອຊຸກຍູ້ສົ່ງເສີມການຜະລິດກະສິກຳທີ່ເປັນທ່າແຮງຂອງປະເທດ ເພື່ອຫຼຸດຜ່ອນການນຳເຂົ້າ ແລະ ສົ່ງເສີມຜະລິດເປັນສິນຄ້າສົ່ງອອກ ດ້ວຍການສະໜອງປັດໄຈການຜະລິດ ເປັນຕົ້ນເຕັກນິກວິຊາການ, ແນວພັນພືດ, ແນວພັນສັດ, ຝຸ່ນ ແລະ ອາຫານສັດທີ່ມີຄຸນນະພາບ ແລະ ຈັດສັນກຳນົດເຂດທີ່ດິນກະສິກຳໃຫ້ມີຄວາມຊັດເຈນ, ຄຸ້ມຄອງທີ່ດິນກະສິກຳ, ຊົນລະປະທານ ແລະ ສົ່ງເສີມການຕັ້ງກຸ່ມ, ສະຫະກອນການຜະລິດໃຫ້ເກີດດອກອອກຜົນ ແລະ ຍືນຍົງ.

ນອກຈາກນີ້, ຄະນະໄດ້ເດີນທາງໄປເບິ່ງເຂດພື້ນທີ່ຕົວຈິງການຂຸດຄົ້ນ ແລະ ຜະລິດທາດໂປຕາສເພື່ອສະໜອງປຸ໋ຍເຄມີຂອງບໍລິສັດອາຊີ-ໂປຕາສສາກົນ ຢູ່ເມືອງທ່າແຂກ ແລະ ພື້ນທີ່ປູກຕົ້ນໝາກມ່ວງຂອງບໍລິສັດ ເຮີນານຊ່າງຈິວເຕັກນິກກະສິກຳ ຈຳກັດ ແລະ ຈຸດຫົວງານສູບນ້ຳໂຄງການຊົນລະປະທານວັງວຽງພີ ຢູ່ເມືອງເຊບັ້ງໄຟ ແຂວງຄຳມ່ວນ; ລົງພື້ນທີ່ໂຄງການກໍ່ສ້າງຊົນລະປະທານຫ້ວຍທ່າຮາວ ຢູ່ເມືອງອຸທຸມພອນ, ໂຄງການຊົນລະປະທານຫາດຟາແລ້ງ ແລະ ໂຄງການຊົນລະກະເສດທີ່ໄດ້ຮັບການຊ່ວຍເຫຼືອຈາກ ສ.ເກົາຫຼີຢູ່ເມືອງຈຳພອນແຂວງສະຫວັນນະເຂດ.



## ສະຫາຍ...

(ຕໍ່ຈາກໜ້າ 1)

ເກີດດອກອອກຜົນຍິ່ງໆຂຶ້ນ, ນຳເອົາຜົນປະໂຫຍດມາສູ່ປະຊາຊົນສອງຊາດ ລາວ-ຈີນ; ພ້ອມດຽວກັນນີ້, ກໍໄດ້ຝາກຄວາມຢື້ຢາມຖາມຂ່າວອັນອົບອຸ່ນ ແລະ ອວຍພອນໄຊອັນປະເສີດໄປຍັງສະຫາຍ ຈ້າວເລີ້ຈີ້ປະທານສະພາຜູ້ແທນປະຊາຊົນທົ່ວປະເທດແຫ່ງສປຈີນ, ບັນດາສະຫາຍຄະນະປະຈຳ ແລະ ສະມາຊິກສະພາຜູ້ແທນປະຊາຊົນທົ່ວປະເທດຈີນ.

ສະຫາຍ ປອ. ໄຊສົມພອນ ພົມວິຫານ ຍັງໄດ້ເຊື້ອເຊີນຄະນະຜູ້ແທນສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ເຂົ້າຮ່ວມສັງເກດການ ແລະ ພົບປະກັບບັນດາປະເທດຄູ່ຮ່ວມເຈລະຈາໃນກອງປະຊຸມໃຫຍ່ສະມັດຊາລັດຖະສະພາ ລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ທີ່ ສປປ ລາວ ໃນເດືອນຕຸລາ 2024 ພ້ອມທັງໃຫ້ການສະໜັບສະໜູນສະພາແຫ່ງຊາດ ໃນການເປັນເຈົ້າພາບຈັດກອງປະຊຸມດັ່ງກ່າວໃຫ້ສຳເລັດຜົນ.

ສະຫາຍ ສູຍເຄີລາຍທີ ຈາເຄີເອີ ໄດ້ສະແດງຄວາມຂອບໃຈຕໍ່ສະຫາຍປະທານສະພາແຫ່ງຊາດລາວ ທີ່ໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະ ແຈ້ງໃຫ້ຊາບສະພາບການພົ້ນເດັ່ນການເຄື່ອນໄຫວວຽກງານຂອງສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ພ້ອມທັງໄດ້ລາຍງານໂດຍຫຍໍ້ຜົນສຳເລັດການພົບປະເຮັດວຽກສອງຝ່າຍກັບສະຫາຍ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ, ປະທານຄະນະມິດຕະພາບລັດຖະສະພາລາວ-ຈີນ ເຊິ່ງໄດ້ຮ່ວມກັນຕີລາຄາຄືນ ການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດໃນໄລຍະຜ່ານມາ ໂດຍສະເພາະແມ່ນການຈັດຕັ້ງຜັນຂະຫຍາຍຂໍ້ຕົກລົງວ່າດ້ວຍການຮ່ວມມືລະຫວ່າງສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ກັບສະພາແຫ່ງຊາດລາວແລະພ້ອມກັນປຶກສາຫາລືເປັນເອກະພາບກັນກ່ຽວກັບທິດທາງແຜນການຮ່ວມມືໃນຕໍ່ໜ້າ.




## ຮອງປະທານ...

(ຕໍ່ຈາກໜ້າ 1)

ຄະນະ ແລະ ຕີລາຄາສູງຕໍ່ຜົນການພົບປະເຮັດວຽກລະຫວ່າງທ່ານປະທານຄະນະມິດຕະພາບລັດຖະສະພາລາວ-ຝຣັ່ງ ກັບທ່ານປະທານຄະນະມິດຕະພາບລັດຖະສະພາຝຣັ່ງ-ລາວ ຂອງສະພາສູງຝຣັ່ງ, ໄດ້ຕີລາຄາກ່ຽວກັບການຮ່ວມມືພົວພັນກັນລະຫວ່າງ 2 ປະເທດ ກໍຄືອົງການນິຕິບັນຍັດຂອງ 2 ປະເທດດ້ວຍການແລກປ່ຽນຢ້ຽມຢາມຂອງຄະນະຜູ້ແທນ, ແລກປ່ຽນສານຊົມເຊີຍ ແລະ ສານອວຍພອນໃນໂອກາດວັນສຳຄັນຕ່າງໆ, ມີການຮ່ວມມືເຊິ່ງກັນ ແລະກັນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນເປັນຕົ້ນແມ່ນກອງປະຊຸມຄູ່ຮ່ວມເຈລະຈາລັດຖະສະພາອາຊີເອີຣົບ (ASEP), ສະຫະພັນລັດຖະສະພາສາກົນ (IPU) ແລະ ອື່ນໆ. ແລະສປປລາວ ໄດ້ເປັນເຈົ້າພາບຈັດກອງປະຊຸມກຳມາທິການວຽກງານເສດຖະກິດ, ສັງຄົມ ແລະສິ່ງແວດລ້ອມ ຂອງສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງ (APF). ທ່ານຮອງປະທານສະພາແຫ່ງຊາດ ຍັງໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບຢ່າງອົບອຸ່ນຂອງຄະນະມິດຕະພາບລັດຖະສະພາຝຣັ່ງ ຕໍ່ຄະນະສະພາແຫ່ງຊາດລາວ ໃນໂອກາດຢ້ຽມຢາມປະເທດຝຣັ່ງໃນເດືອນມີນາທີ່ຜ່ານມາ.

ທ່ານຮອງປະທານສະພາແຫ່ງຊາດ ຍັງໄດ້ສະເໜີໃຫ້ສອງຄະນະມິດຕະພາບລັດຖະສະພາລາວ -ຝຣັ່ງ, ຝຣັ່ງ-ລາວ ສືບຕໍ່ຊຸກຍູ້ໃຫ້ມີການພົວພັນລະຫວ່າງ 2 ຝ່າຍ, ສືບຕໍ່ເປັນຂົວຕໍ່ມິດຕະພາບທີ່ດີລະຫວ່າງສອງປະເທດ, ສະແດງຄວາມຂອບໃຈທີ່ຜ່ານມາປະເທດຝຣັ່ງ ໄດ້ໃຫ້ການຊ່ວຍເຫຼືອ ສປປ ລາວ ໃນຫຼາຍດ້ານ: ສຶກສາ, ສາທາ, ການພັດທະນາຊັບພະຍາກອນມະນຸດ (ພາສາຝຣັ່ງ). ທ່ານຮອງປະທານສະພາແຫ່ງຊາດ ຍັງໄດ້ແຈ້ງໃຫ້ຄະນະຜູ້ແທນຊາບວ່າ ໃນປີ 2024, ສະພາແຫ່ງຊາດລາວ ຈະເປັນເຈົ້າພາບຈັດກອງປະຊຸມໃຫຍ່ສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (AIPA) ຄັ້ງທີ 45 ສະແດງຄວາມຫວັງວ່າລັດຖະສະພາຝຣັ່ງ ຈະໃຫ້ການສະໜັບສະໜູນໃນການປະຕິບັດພັນທະສາກົນໃນຄັ້ງນີ້.

ທ່ານ ແວັງຊ້ອງ ເອແປ ໄດ້ສະແດງຄວາມຂອບໃຈຕໍ່ທ່ານຮອງປະທານສະພາແຫ່ງຊາດ ທີ່ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ, ຕີລາຄາສູງການພົວພັນຮ່ວມມືຂອງສອງອົງການນິຕິບັນຍັດ ກໍຄືລະຫວ່າງສອງຄະນະມິດຕະພາບລັດຖະສະພາສອງປະເທດ ແລະ ແຈ້ງໃຫ້ຊາບສະພາບການພົ້ນເດັ່ນການ ເຄື່ອນໄຫວວຽກງານຂອງສະພາສູງຝຣັ່ງ ພ້ອມທັງໄດ້ລາຍງານໂດຍຫຍໍ້ຜົນສຳເລັດການພົບປະເຮັດວຽກສອງຝ່າຍກັບທ່ານ ຮສ. ປອ. ວຽງວິໄລ ທ່ຽງຈັນໄຊ ປະທານຄະນະມິດຕະພາບລັດຖະສະພາລາວ-ຝຣັ່ງ ແລະ ການຢ້ຽມຢາມທ້ອງຖິ່ນຂອງປະເທດລາວ.

ກ່ອນໜ້ານີ້, ຄະນະຜູ້ແທນດັ່ງກ່າວ ໄດ້ເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຢູ່ແຂວງຫຼວງພະບາງ ເຊິ່ງໄດ້ພົບປະກັບທ່ານຮອງປະທານສະພາປະຊາຊົນແຂວງ, ຫົວໜ້າຂະແໜງມໍລະດົກໂລກ ຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ, ຢ້ຽມຢາມໂຮງຮຽນສອງພາສາລາວ-ຝຣັ່ງ ແລະ ຢ້ຽມຊົມແຫຼ່ງທ່ອງທ່ຽວສຳຄັນຂອງແຂວງຈຳນວນໜຶ່ງ.

**(ນາງ ອາລິນ ສຸພົມມະປະດິດ)**

# ສພຂ ຫຼວງນ້ຳທາ ທາບທາມຮ່າງກົດໝາຍ 10 ສະບັບ



(ສພຊ) - ເພື່ອຮັບປະກັນໃຫ້ເນື້ອໃນຂອງຮ່າງກົດໝາຍຂອງສະພາແຫ່ງຊາດ ຈຳນວນ 10 ສະບັບ ໃຫ້ມີເນື້ອໃນຄົບຖ້ວນ, ຮັດກຸມ ແລະ ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ໃນປັດຈຸບັນ ທັງເພື່ອປະກອບຄຳເຫັນຕໍ່ການປັບປຸງຮ່າງກົດໝາຍວ່າດ້ວຍສະພາແຫ່ງຊາດ ຈຳນວນ 10 ສະບັບ ໃຫ້ເປັນລະບົບ, ຄົບຖ້ວນ, ຮັດກຸມ ແລະ ສາມາດປະຕິບັດໄດ້ຢ່າງມີປະສິດທິພາບ, ປະສິດທິຜົນ.

ກອງປະຊຸມທາບທາມຮ່າງກົດໝາຍຂອງສະພາແຫ່ງຊາດ ຈຳນວນ 10 ສະບັບ ປະກອບມີ: ຮ່າງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ຮ່າງກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ, ຮ່າງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, ຮ່າງກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ, ຮ່າງກົດໝາຍວ່າດ້ວຍການຕ້ານການສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ຮ່າງກົດໝາຍວ່າດ້ວຍການທ່ອງທ່ຽວ, ຮ່າງກົດໝາຍວ່າດ້ວຍສະຫະກອນ (ສ້າງໃໝ່), ຮ່າງກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາ (ສ້າງໃໝ່), ຮ່າງກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມເຊື້ອເອັດຈ໌ໄອວີ ແລະ ຮ່າງກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ ໄດ້ຈັດຂຶ້ນໃນວັນທີ 20-21 ພຶດສະພາ 2024 ທີ່ສະໂມສອນຂອງແຂວງຫຼວງນ້ຳທາ ໂດຍການເປັນປະທານຂອງທ່ານ ກົງເພັດ ແກ້ວບົວພາ ຮອງປະທານສະພາປະຊາຊົນແຂວງ, ມີບັນດາທ່ານ ສສຊ ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ອະດີດ ສສຊ, ຫົວໜ້າ-ຮອງຫົວໜ້າພະແນກການຂອງແຂວງ, ຂົງເຂດຕຸລາການ, ຄະນະນຳຈາກ 2 ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ອົງການຈັດຕັ້ງມະຫາຊົນ, ລັດວິສາຫະກິດ, ບັນດາທະນາຄານ ແລະ ພະນັກງານທີ່ກ່ຽວຂ້ອງເຂົ້າຮ່ວມທັງໝົດ 80 ກວ່າທ່ານ.

ໃນກອງປະຊຸມໄດ້ຮັບຟັງການສະເໜີເນື້ອໃນໂດຍຫຍໍ້ຂອງຮ່າງກົດໝາຍທີ່ສ້າງ ແລະ ປັບປຸງ, ຫຼັງຈາກນັ້ນປະທານກອງປະຊຸມໄດ້ມີຄຳເຫັນເຈາະຈີ້ມແຕ່ລະຮ່າງກົດໝາຍ ເພື່ອໃຫ້ບັນດາທ່ານຜູ້ແທນກອງປະຊຸມໄດ້ປະກອບຄຳເຫັນໃສ່ແຕ່ລະຮ່າງກົດໝາຍ; ພ້ອມດຽວກັນ, ຜູ້ແທນເຂົ້າຮ່ວມກອງປະຊຸມໄດ້ພ້ອມກັນຄົ້ນຄວ້າ ແລະ ປະກອບຄຳຄິດເຫັນຕໍ່ຮ່າງກົດໝາຍດັ່ງກ່າວຢ່າງມີຈຸດສຸມເພື່ອເຮັດໃຫ້ເນື້ອໃນຂອງກົດໝາຍມີເນື້ອໃນຖືກຕ້ອງສອດຄ່ອງກັບຄວາມເປັນຈິງ, ສາມາດຮັບຮອງເອົາ ແລະ ນຳໄປຈັດຕັ້ງປະຕິບັດໃຫ້ມີຄຸນນະພາບ.

**(ນາງ ອຳພອນ ສີປະເສີດ)**

# ທາບທາມຮ່າງກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ທີ່ແຂວງອຸດົມໄຊ



(ສພຊ) - ໂດຍປະຕິບັດຕາມຄຳແນະນຳຂອງກຳມາທິການກົດໝາຍສະພາແຫ່ງຊາດ ກ່ຽວກັບການຈັດກອງປະຊຸມທາບທາມຮ່າງກົດໝາຍ, ໃນການຄົ້ນຄວ້າປະກອບຄຳເຫັນໃຫ້ສອດຄ່ອງ, ເໝາະສົມ, ຖືກຕ້ອງ, ຈະແຈ້ງ, ລະອຽດຄົບຖ້ວນ ແລະ ຮັດກຸມ; ຕອນເຊົ້າວັນທີ 21 ພຶດສະພາ 2024 ທີ່ຫ້ອງປະຊຸມພະແນກແຜນການ ແລະ ການລົງທຶນແຂວງອຸດົມໄຊ ໄດ້ຈັດກອງປະຊຸມທາບທາມຮ່າງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ໂດຍການເປັນປະທານຂອງທ່ານ ນາງ ຄຳພອນ ພົມມະຈັນ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ, ຮອງປະທານສະພາປະຊາຊົນແຂວງອຸດົມໄຊ; ເຂົ້າຮ່ວມມີສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງອ້ອມຂ້າງເມືອງໄຊ, ຕາງໜ້າບັນດາພະແນກການ, ອົງການ ແລະ ພະນັກງານວິຊາການສະພາປະຊາຊົນແຂວງອຸດົມໄຊ ເຂົ້າຮ່ວມ.

ການຈັດກອງປະຊຸມຄັ້ງນີ້, ກໍເພື່ອຄົ້ນຄວ້າ, ປະກອບຄຳເຫັນໃສ່ຮ່າງກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ (ສະບັບປັບປຸງ) ພ້ອມທັງຮັບປະກັນເນື້ອໃນຮ່າງກົດໝາຍດັ່ງກ່າວໃຫ້ຄົບຖ້ວນ, ຮັດກຸມ ແລະ ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມເຊິ່ງໃນກອງປະຊຸມໄດ້ຜ່ານຮ່າງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ໂດຍທ່ານ ນາງ ຈັນທະລາ ໄຊບຸນເຮືອງ ຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງ; ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມໄດ້ປະກອບຄຳຄິດເຫັນໃສ່ຮ່າງກົດໝາຍດັ່ງກ່າວ ຢ່າງຫຼາກຫຼາຍ ເປັນຂະບວນຟົດຟື້ນ.

ພາຍຫຼັງສຳເລັດການທາບທາມປະກອບຄຳເຫັນ, ຄະນະຮັບຜິດຊອບຈະໄດ້ສັງລວມສົ່ງໃຫ້ກຳມາທິການກົດໝາຍຂອງສະພາແຫ່ງຊາດ ເພື່ອກະກຽມນຳເຂົ້າພິຈາລະນາ, ຮັບຮອງເອົາຢູ່ໃນວາລະກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະໄຂຂຶ້ນໃນເດືອນມິຖຸນາ 2024 ທີ່ນະຄອນຫຼວງວຽງຈັນ.

**(ສີແຫວງ ສີບຸນເຮືອງ)**

# ປະທານ ສພຂ ສະຫວັນນະເຂດ ເຄື່ອນໄຫວວຽກງານຢູ່ເມືອງນອງ ແລະ ເຊໂປນ



(ສພຊ) - ໃນລະຫວ່າງວັນທີ 16-17 ພຶດສະພາ 2024 ທ່ານ ກົງແກ້ວ ມີວໍລະຈັກ ປະທານສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ, ທ່ານ ທອງໄສ ອິນທິແສງ ປະທານຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ພ້ອມດ້ວຍຄະນະ, ມີຫົວໜ້າພະແນກພະລັງງານ ແລະ ບໍ່ແຮ່ແຂວງ, ຮອງຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ຮອງຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ ພ້ອມດ້ວຍວິຊາການຈຳນວນໜຶ່ງ ໄດ້ເຄື່ອນໄຫວວຽກງານຢູ່ເມືອງນອງ ແລະ ເມືອງເຊໂປນ ແຂວງສະຫວັນນະເຂດ ໂດຍການຕ້ອນຮັບຈາກບັນດາທ່ານເຈົ້າເມືອງ, ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ, ກຳມະການພັກເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງທີ່ກ່ຽວຂ້ອງຂອງເມືອງ ພ້ອມດ້ວຍອຳນາດການປົກຄອງ ແລະ ພໍ່ແມ່ປະຊາຊົນທັງສອງເມືອງເຂົ້າຮ່ວມ.

ໂອກາດດັ່ງກ່າວ, ທ່ານ ກົງແກ້ວ ມີວໍລະຈັກ ພ້ອມດ້ວຍຄະນະຍັງໄດ້ເຂົ້າຮ່ວມພິທີປ່ອຍປາຢູ່ໜອງລວມຂອງບ້ານປໍ ເມືອງນອງ ແຂວງສະຫວັນນະເຂດ ເພື່ອເປັນການປຸກລະດົມປວງຊົນໃຫ້ເຫັນໄດ້ຄວາມສຳຄັນ ພ້ອມທັງເຊີດຊູສະຕິຮັກ, ຫວງແຫນຖະໜອມ ແລະ ເປັນເຈົ້າການຮ່ວມກັນ ໃນການຄຸ້ມຄອງກວດກາ ອະນຸລັກປົກປັກຮັກສາ ແລະ ນຳໃຊ້ສັດນ້ຳ-ສັດປ່າໃຫ້ຍືນຍົງ ແລະ ຮັບປະກັນຄວາມອຸດົມສົມບູນ ຕໍ່ລະບົບນິເວດທຳມະຊາດ ເພື່ອປະກອບສ່ວນຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໃຫ້ດີຂຶ້ນ ແລະ ເປັນທ່າແຮງຕໍ່ການພັດທະນາເສດຖະກິດ-ສັງຄົມຂອງປະເທດຊາດ ເຊິ່ງທ່ານ ກົງແກ້ວ ມີວໍລະຈັກ ໄດ້ມອບລູກປາຈຳນວນ 500 ຖົງ ເຊິ່ງໄດ້ຈາກປະກອບສ່ວນຂອງພະແນກການຕ່າງໆ ແລະ ນັກທຸລະກິດລວມມູນຄ່າທັງໝົດ 29 ລ້ານກີບ ໂດຍການກ່າວຮັບຂອງທ່ານ ຈິນດາວັນ ບຸດລາສີ ເຈົ້າເມືອງນອງ.

ປະທານ ສພຂ ສະຫວັນນະເຂດ ພ້ອມດ້ວຍຄະນະ ຍັງໄດ້ເດີນທາງໄປເບິ່ງຕົ້ນໄມ້ຂະຍູງໃຫຍ່ທີ່ບ້ານສະວີເພື່ອເປັນການຊຸກຍູ້ລະດົມໃຫ້ປະຊາຊົນຮັກສາຊັບສົມບັດອັນລວມຂອງບ້ານໃຫ້ຄົງຢູ່ຄູ່ກັບປະຊາຊົນລາວບັນດາເຜົ່າເວົ້າລວມ ເວົ້າສະເພາະກໍຄືປະຊາຊົນພາຍໃນເມືອງ ເຊິ່ງຕົ້ນໄມ້ຂະຍູງດັ່ງກ່າວແມ່ນມີອາຍຸຫຼາຍກວ່າ 200 ປີ. ນອກຈາກນັ້ນ, ຍັງໄດ້ເຄື່ອນໄຫວຕິດຕາມຊຸກຍູ້ໂຄງການທະລຸເສັ້ນທາງແກ້ງລົ້ນຕື່ມອີກ. ພ້ອມນັ້ນ, ຄະນະຍັງໄດ້ສືບຕໍ່ເຄື່ອນໄຫວວຽກງານຕິດຕາມຊຸກຍູ້ການກໍ່ສ້າງໂຮງຮຽນຢູ່ບ້ານລາກແລະບ້ານກ້ອກ ກຸ່ມບ້ານຈຽງຕູບ ຂອງເມືອງເຊໂປນ ເຊິ່ງປັດຈຸບັນແມ່ນກຳລັງດຳເນີນການກໍ່ສ້າງ ເປັນອາຄານຊັ້ນດຽວ, ມີ 3 ຫ້ອງຮຽນ, 1 ຫ້ອງການ ແລະ ມີ 2 ຫ້ອງນ້ຳ, ຂະໜາດກວ້າງ 8 ແມັດ, ຍາວ 25 ແມັດເຊິ່ງຄວາມຄືບໜ້າໃນການກໍ່ສ້າງແມ່ນສາມາດເຮັດສຳເລັດໜ້າວຽກການເທຄານດິນ ແລະ ກຳລັງເທຕັ້ງເສົາ ໄດ້ປະມານ 10 ສ່ວນຮ້ອຍ. ແຫຼ່ງທຶນໃນການກໍ່ສ້າງໂຮງຮຽນຫຼັງນີ້ແມ່ນໄດ້ຈາກການລະດົມທຶນຈາກອົງການຈັດຕັ້ງພັກ-ລັດ, ນັກທຸລະກິດຜູ້ປະກອບການປັດຈຸບັນທຶນຍັງບໍ່ພຽງພໍ ແລະ ຈະໄດ້ສືບຕໍ່ລະດົມທຶນໃນການກໍ່ສ້າງໃຫ້ສຳເລັດຕາມແຜນການທີ່ວາງໄວ້ ເພື່ອເຮັດໃຫ້ພໍ່ແມ່ປະຊາຊົນບັນດາເຜົ່າ ກໍຄືລູກຫຼານທີ່ຢູ່ເຂດຫ່າງໄກ ໄດ້ຮັບການສຶກສາຢ່າງທົ່ວເຖິງ. ນອກຈາກນີ້, ຄະນະກໍໄດ້ຕິດຕາມບັນດາໂຄງການພັດທະນາພື້ນຖານໂຄງລ່າງອື່ນໆຕື່ມອີກ.



# ກອງປະຊຸມທາບທາມຮ່າງກົດໝາຍ ສະບັບປັບປຸງ ທີ່ແຂວງຫຼວງພະບາງ



(ສພຊ) - ໃນວັນທີ 23-24 ພຶດສະພາ 2024 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຫຼວງພະບາງ ໄດ້ຈັດກອງປະຊຸມທາບທາມຮ່າງກົດໝາຍ ພາຍໃຕ້ການເປັນປະທານຂອງທ່ານ ວົງສະຫວັນ ເທບພະຈັນ ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 6 ແຂວງຫຼວງພະບາງ; ມີບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງຂອງແຂວງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການນຳສະເໜີໂດຍຫຍໍ້ ກ່ຽວກັບບັນດາຮ່າງກົດໝາຍທີ່ນຳມາຄົ້ນຄວ້າ ແລະ ປັບປຸງ ຄື: ຮ່າງກົດໝາຍວ່າດ້ວຍການທ່ອງທ່ຽວ (ສະບັບປັບປຸງ), ຮ່າງກົດໝາຍວ່າດ້ວຍການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ສະບັບປັບປຸງ), ຮ່າງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ (ສະບັບປັບປຸງ), ຮ່າງກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ (ສະບັບປັບປຸງ) ແລະ ກົດໝາຍຮ່າງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ (ສະບັບປັບປຸງ); ຫຼັງຈາກນັ້ນ, ປະທານກອງປະຊຸມກໍໄດ້ມີຄຳເຫັນເຈາະຈີ້ມຕໍ່ບັນດາຮ່າງກົດໝາຍທີ່ນຳມາທາບທາມ ເພື່ອໃຫ້ບັນດາທ່ານຜູ້ແທນກອງປະຊຸມໄດ້ປະກອບຄຳຄິດຄຳເຫັນ, ໄດ້ຄົ້ນຄວ້າ ແລະ ປະກອບຄຳເຫັນຕໍ່ຮ່າງກົດໝາຍ ຢ່າງມີຈຸດສຸມ ເພື່ອເຮັດໃຫ້ເນື້ອໃນຂອງຮ່າງກົດໝາຍມີເນື້ອໃນຄົບຖ້ວນ, ຮັດກຸມ, ສອດຄ່ອງກັບສະພາບເສດຖະກິດໃນປັດຈຸບັນ ແລະ ນຳໄປຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງສຸດ.

**(ວິລິຍະ ວັນຍະສີ)**

# ສະພາປະຊາຊົນແຂວງວຽງຈັນ ທາບທາມຄຳເຫັນໃສ່ຮ່າງກົດໝາຍ



(ສພຊ) - ກອງປະຊຸມຄົ້ນຄວ້າທາບທາມປະກອບຄຳຄິດຄຳເຫັນໃສ່ຮ່າງກົດໝາຍ 5 ສະບັບ ໄດ້ຈັດຂຶ້ນໃນລະຫວ່າງວັນທີ 21-23 ພຶດສະພາ 2024 ທີ່ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ບຸນສອນ ເຜັດລາວັນ ປະທານສະພາປະຊາຊົນແຂວງວຽງຈັນ; ມີບັນດາທ່ານສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງວຽງຈັນ, ບັນດາທ່ານຫົວໜ້າພະແນກການ, ອົງການ, ກົມກອງ ແລະ ພະນັກງານກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ບຸນສອນ ເຜັດລາວັນ ໄດ້ກ່າວວ່າ: ເພື່ອປະຕິບັດຕາມແຈ້ງການສະບັບເລກທີ 135/ຄລສ.ກໝ, ລົງວັນທີ 02 ເມສາ 2024 ຂອງຄະນະເລຂາທິການສະພາແຫ່ງຊາດ ແລະ ຄຳແນະນຳສະບັບລົງວັນທີ 04 ເມສາ 2024 ຂອງກຳມາທິການກົດໝາຍສະພາແຫ່ງຊາດ ກ່ຽວກັບການກະກຽມແລະດຳເນີນການຄົ້ນຄວ້າທາບທາມປະກອບຄຳຄິດຄຳເຫັນໃສ່ຮ່າງກົດໝາຍ ກ່ອນທີ່ຈະນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ຈຳນວນ 5 ສະບັບຄື: ຮ່າງກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອັກຄີໄພ (ສະບັບປັບປຸງ); ສະເໜີຮ່າງກົດໝາຍວ່າດ້ວຍການທ່ອງທ່ຽວ (ສະບັບປັບປຸງ); ສະເໜີຮ່າງກົດໝາຍວ່າດ້ວຍການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ສະບັບປັບປຸງ); ສະເໜີຮ່າງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ(ສະບັບປັບປຸງ)ແລະສະເໜີຮ່າງກົດໝາຍວ່າດ້ວຍສົ່ງເສີມການລົງທຶນ (ສະບັບປັບປຸງ) ແລະ ເປັນການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງສູນກາງພັກເວົ້າລວມ ເວົ້າສະເພາະ ຊາວແຂວງວຽງຈັນ ພວມພ້ອມກັນສຸມໃສ່ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ VI ຂອງອົງຄະນະພັກແຂວງ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ 5 ປີ ຂອງແຂວງ ແລະ ກຳລັງຈັດຕັ້ງຜັນຂະຫຍາຍເນື້ອໃນຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງວຽງຈັນ ຊຸດທີ II ເຂົ້າສູ່ວຽກງານຕົວຈິງ, ເພື່ອຮັບປະກັນໄດ້ເຖິງບັນດາເນື້ອໃນ ເອກະສານຮ່າງກົດໝາຍທີ່ໄດ້ນຳມາສະເໜີທາບທາມປະກອບຄຳຄິດຄຳເຫັນໃນເທື່ອນີ້ ໃຫ້ມີເນື້ອໃນລະອຽດ, ຄົບຖ້ວນ, ສົມບູນ ແລະແທດເໝາະກັບສະພາບຕົວຈິງ, ສາມາດພິຈາລະນາຮັບຮອງ ແລະ ສາມາດນຳໄປຈັດຕັ້ງປະຕິບັດໃຫ້ໄດ້ຮັບໝາກຜົນທີ່ດີ.

ໂອກາດດັ່ງກ່າວ, ທ່ານ ບຸນສອນ ເຜັດລາວັນ ໄດ້ສະເໜີໃຫ້ບັນດາທ່ານສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງທີ່ເຂົ້າຮ່ວມ ພ້ອມກັນເພີ່ມທະວີຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງຂອງຕົນ ໃນການປະກອບຄຳຄິດ-ຄຳເຫັນໃສ່ບັນດາຮ່າງກົດໝາຍຈຳນວນ 5 ສະບັບດັ່ງກ່າວຢ່າງເລິກເຊິ່ງ ແລະ ກົງໄປກົງມາ, ສອດຄ່ອງຕາມແນວທາງຂອງພັກ, ລັດຖະທຳມະນູນ ແລະ ສະພາບຕົວຈິງຂອງຂົງເຂດວຽກງານທີ່ຕົນຮັບຜິດຊອບ.

**(ນາງ ບຸລາຕີ ແສນທະວົງ)**




## ເຝິກອົບຮົມ...

(ຕໍ່ຈາກໜ້າ 1)

ສະພາແຫ່ງຊາດ; ເຂົ້າຮ່ວມມີບັນດາທ່ານວິທະຍາກອນຈາກສະພາແຫ່ງຊາດ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແລະ ອົງການກວດກາແຫ່ງລັດ ພ້ອມດ້ວຍສຳມະນາກອນຈາກບັນດາກົມພາຍໃນ ສພຊ ແລະ ສພຂ 2 ແຂວງຄື: ຫຼວງພະບາງ ແລະ ຄຳມ່ວນ.

ທັງນີ້, ກໍເພື່ອເພີ່ມທະວີ ແລະຍົກສູງຄຸນນະພາບຂອງພະນັກງານ ໃຫ້ມີຄວາມຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງ ແລະ ເປັນເອກະພາບກັນໃນການຈັດຕັ້ງປະຕິບັດວຽກງານຕົວຈິງກ່ຽວກັບຂັ້ນຕອນ, ວິທີການເວົ້າ (ຫຼືຮັບສາຍດ່ວນ 156), ການບັນທຶກ-ສັງລວມເນື້ອໃນຕົ້ນຕໍທີ່ປະຊາຊົນໄດ້ສະເໜີໃຫ້ສະມາຊິກສະພາແຫ່ງຊາດ (ສສຊ) ພິຈາລະນາ, ແກ້ໄຂໃນແຕ່ລະໄລຍະໃຫ້ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນກວ່າເກົ່າ; ຍົກສູງຄວາມສາມາດຜູ້ທີ່ເຮັດວຽກງານສາຍດ່ວນໃນການເປັນເສນາທິການຊ່ວຍວຽກບັນດາທ່ານ ສສຊ ໃນຖານະເປັນຕົວແທນແຫ່ງມານະຈິດ, ສິດຜົນປະໂຫຍດອັນຊອບທຳຂອງປະຊາຊົນລາວບັນດາເຜົ່າພິຈາລະນາ, ແກ້ໄຂບັນຫາທີ່ປະຊາຊົນສະເໜີ ໃຫ້ວ່ອງໄວ ແລະ ຮັບປະກັນຄວາມຍຸຕິທຳ.

ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ໄດ້ມີຄຳເຫັນກ່າວເປີດກອງປະຊຸມວ່າ: ວຽກງານສາຍດ່ວນ ເປັນວຽກງານທີ່ສຳຄັນ ເຊິ່ງໄດ້ເລີ່ມຕົ້ນຮັບສາຍດ່ວນມາຕັ້ງແຕ່ສະພາແຫ່ງຊາດ ຊຸດທີ V ສືບຕໍ່ຮັບມາຮອດປັດຈຸບັນແລະນິຕິກຳກ່ຽວກັບວຽກງານສາຍດ່ວນໃນໄລຍະຜ່ານມາ ບໍ່ທັນມີເປັນອັນສະເພາະ, ຫາກໍໄດ້ມີການປັບປຸງເປັນຮ່າງແລ້ວ ແລະ ຈະສ້າງເປັນມະຕິຂອງຄະນະປະຈຳສະພາແຫ່ງຊາດວ່າດ້ວຍວຽກງານສາຍດ່ວນສະພາແຫ່ງຊາດ ເພື່ອເປັນບ່ອນອີງນຳໃຊ້ໃນການຮັບຄຳສະເໜີຂອງພົນລະເມືອງ, ການຈັດຕັ້ງ ຫຼື ນິຕິບຸກຄົນຜ່ານທາງໂທລະສັບສາຍດ່ວນ 156, ສື່ເອເລັກໂຕຣນິກ ແລະ ຕູ້ຮັບຄຳສະເໜີກ່ຽວກັບບັນຫາເສດຖະກິດ, ວັດທະນະທຳ-ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຍຸຕິທຳ ແລະ ການປະຕິບັດສິດ, ໜ້າທີ່ຂອງສະມາຊິກພັກ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ. ວຽກງານສາຍດ່ວນ ແມ່ນຄວາມຮັບຜິດຊອບຂອງຄະນະເລຂາທິການສະພາແຫ່ງຊາດ ໂດຍມອບໃຫ້ກົມກວດກາເປັນເສນາທິການ ໃນການປະຕິບັດວຽກງານດັ່ງກ່າວໃນໄລຍະການດຳເນີນກອງປະຊຸມສະພາແຫ່ງຊາດ; ນອກຈາກນັ້ນ, ບັນດາກຳມາທິການ, ສະຖາບັນຄົ້ນຄວ້ານິຕິກຳ ແລະ ຄະນະເລຂາທິການສະພາແຫ່ງຊາດ ກໍເປັນສ່ວນໜຶ່ງໃນການຕິດຕາມ ແລະ ຊຸກຍູ້ບັນດາຄຳສະເໜີທີ່ປະຊາຊົນໄດ້ສະເໜີເຂົ້າມາໃນໄລຍະດຳເນີນກອງປະຊຸມສະພາແຫ່ງຊາດ ໄດ້ຮັບການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

ໃນວາລະດຳເນີນການເຝິກອົບຮົມ, ບັນດາທ່ານວິທະຍາກອນໄດ້ສະເໜີບົດຄວາມຮູ້ພື້ນຖານໃນການຟັງ, ວິ ເຄາະຂໍ້ມູນ ເພື່ອສັງລວມເນື້ອໃນຂໍ້ສະເໜີຂອງປະຊາຊົນຜ່ານໂທລະສັບສາຍດ່ວນ;ຂັ້ນຕອນຫຼືບາດກ້າວດຳເນີນວຽກງານສາຍດ່ວນ ແລະ ຂໍ້ຫ້າມໃນການຮັບສາຍດ່ວນ; ຂັ້ນຕອນ ແລະ ວິທີການສະຫຼຸບສັງລວມເນື້ອໃນຄຳສະເໜີຂອງປະ ຊາຊົນ, ການເຮັດປື້ມປະມວນເນື້ອໃນສາຍດ່ວນ ແລະ ກວດແກ້ໄວຍາກອນ; ຂັ້ນຕອນ ແລະ ວິທີການສົ່ງຄຳສະເໜີຂອງປະຊາຊົນຫາພາກສ່ວນກ່ຽວຂ້ອງ ແລະ ການຕິດຕາມ, ສັງລວມລາຍງານຜົນການແຈ້ງຕອບເນື້ອໃນຄຳສະເໜີຂອງປະຊາຊົນຈາກພາກສ່ວນກ່ຽວຂ້ອງ; ສະພາບການຈັດຕັ້ງປະຕິບັດວຽກງານສາຍດ່ວນ ແລະຕູ້ຮັບຄຳສະເໜີຂອງອົງການກວດກາແຫ່ງລັດ; ສະພາບການຈັດຕັ້ງປະຕິບັດວຽກງານສາຍດ່ວນຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ; ຄວາມໝາຍ, ຄວາມສຳຄັນ ແລະ ສະພາບການຈັດຕັ້ງປະຕິບັດວຽກງານສາຍດ່ວນຂອງສະພາແຫ່ງຊາດ. ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມ ກໍໄດ້ຄົ້ນຄວ້າ, ປະກອບຄຳເຫັນ ແລະ ສົນທະນາແລກປ່ຽນບົດຮຽນຮ່ວມກັນຢ່າງເລິກເຊິ່ງ, ກົງໄປກົງມາ, ມີເຫດມີຜົນ, ຍົກໃຫ້ເຫັນການຈັດຕັ້ງປະຕິບັດຕົວຈິງ ເພື່ອຊອກຫາວິທີການ ແລະ ມາດຕະການແກ້ໄຂໃຫ້ດີຂຶ້ນແນໃສ່ເຮັດໃຫ້ບົດຮຽນຕ່າງໆທີ່ນຳມາສະເໜີນັ້ນສາມາດນຳໄປໝູນໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານສາຍດ່ວນ 156 ຂອງ ສພຊ ໃນຕໍ່ໜ້າ ໃຫ້ມີຜົນສຳເລັດຫຼາຍຂຶ້ນກວ່າເກົ່າ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼືສະເຕັບສ໌ (STEPs), ອົງການ Helvetas ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ສົມທົບກັບງົບປະມານຂອງຄະນະເລຂາທິການສະພາແຫ່ງຊາດ.

**(ນາງ ກຸກກີກ ບຸດດາໄຊ)**




# ຢ່າໃຫ້ທຳມະຊາດລົງໂທດ

\# ດັ້ນກົບເມກ

ຄົນເຮົາ ຖ້າບໍ່ຢາກໃຫ້ທຳມະຊາດລົງໂທດ ກໍຄວນມີປັນຍາ ຮູ້ຈັກຄຸນຄ່າທຳມະຊາດ ແລະ ມີສິນທຳ ຮູ້ຈັກເຄົາລົບທຳມະຊາດຄື: ການປົກປັກຮັກສາບໍ່ທຳລາຍທຳມະຊາດ, ດິນ-ນ້ຳ-ລົມ ແລະ ໄຟ ຄື 4 ທາດ ທີ່ມີພະລັງງານຮຸນແຮງ ສ້າງຄວາມສຸກແກ່ມະນຸດໄດ້ ແລະ ສ້າງຄວາມເສຍຫາຍແກ່ມະນຸດໄດ້ເຊັ່ນດຽວກັນ ຖ້າວ່າມະນຸດຫາກທຳລາຍທຳມະຊາດກ່ອນ ຫຼື ຖ້າວ່າໂລກຂາດຄວາມສົມດຸນດິນຖະຫຼົ່ມ, ນ້ຳຖ້ວມ, ລົມພະຍຸ, ໄຟໄໝ້ປ່າ ເຊິ່ງຄົນເຮົາລ້ວນແຕ່ເຫັນມາແລ້ວ ແຕ່ຈື່ຈຳສຳລັບບາງຄົນ.

ບາງຄົນເຫັນໄພພິບັດຈາກທຳມະຊາດ ບໍ່ຈື່ຈຳຍ້ອນວ່າບໍ່ໄດ້ຮັບຜົນກະທົບໂດຍກົງ ທັງໆທີ່ສິ່ງທີ່ເກີດຂຶ້ນນັ້ນ ອາດມາຈາກຄຳສັ່ງ ຫຼື ການກະທຳຂອງຜູ້ກ່ຽວ. ດັ່ງນັ້ນ, ລະຫວ່າງໄພທຳມະຊາດ ແລະ ໄພໃນຈິດໃຈຂອງຄົນ ອັນໃດເປັນສິ່ງທີ່ໜ້າຄົ້ນຄິດໃຫ້ເກີດປັນຍາ, ຖ້າຄົນເຮົາຫາກຮູ້ຈັກເສຍສະຫຼະ, ເຄົາລົບສິນທຳ-ເຄົາລົບຮັກສາທຳມະຊາດ ຄວາມສົມດຸນຂອງໂລກ ຈະໃຫ້ແຕ່ຄວາມຊຸ່ມເຢັນ, ເມື່ອໃດຫາກທຳລາຍທຳມະຊາດ ມັນກໍຈະເຜົາໄໝ້ຄົນເຮົາຄືນໄດ້ຄືກັນ.

ໄຟ 3 ກອງທີ່ເຜົາໄໝ້ຢູ່ໃນຈິດໃຈຂອງມະນຸດຄື: ໄຟຣາຄະ: ຍ່ອມເຜົາໄໝ້ຜູ້ຫຼົງໄຫຼໃນກາມທັງປວງ ບໍ່ຮູ້ຈັກອັນໃດຖືກ-ຜິດ, ລະເມີດສິນທຳ-ຮີດຄອງປະເພນີ ຍ້ອນໄຟຣາຄະເຜົາໃຈ; ໄຟໂທສະ ຄືໄຟແຫ່ງອຳນາດພະຍາບາດ, ຄຽດຊັງ ຄິດຂົ່ມເຫັງເຂັ່ນຂ້າຄົນອື່ນ ໂລກກໍຢູ່ບໍ່ເປັນສຸກ ແລະ ໄຟກອງສຸດທ້າຍ ຄື: ໄຟແຫ່ງໂມຫະຄວາມຫຼົງມົວເມົາຂາດປັນຍາ, ບໍ່ຮູ້ຖືກຜິດ-ບໍ່ຮູ້ຊົ່ວດີ, ຫຼົງໄຫຼໃນໂລກມານຍາ, ຫຼົງໄຫຼໃນກະແສໂລກ ໃນສິ່ງສົມມຸດ ເມື່ອເຖິງເວລາ ມັນກໍສູນສະ ຫຼາຍພັດພາກຈາກໄປແນ່ນອນ.

ສັງລວມໄດ້ວ່າ: ໂລກມະນຸດເກີດວິບັດຍ້ອນນ້ຳມືມະນຸດເອງ; ທຳມະຊາດສົມບູນດີກໍຍ້ອນມະນຸດທຳລາຍ ເພາະຈາກຄວາມໂລບຄອບງຳຈົນບໍ່ສົນໃຈ ຄິດບໍ່ອອກວ່າຜົນກະທົບຕາມມາທັງນ້ຳຖ້ວມ, ອາກາດຮ້ອນ, ໄຟໄໝ້ປ່າ... ຢ່າລືມວ່າ: ໂລກບໍ່ອາດສະໜອງຄວາມຕ້ອງການໃຫ້ແກ່ຄົນທີ່ໂລບ ຫຼື ຄວາມໂລບຄອບງຳ ຄວາມພິນາດກໍຕາມມາ.






# ວິທີເຮັດວຽກ

**ພາກທີ 6**
**ວິທີນຳ**

2.ຕ້ອງຈັດຕັ້ງການປະຕິບັດໃຫ້ຖືກ. ຢາກເຮັດໄດ້ແນວນັ້ນ ຖ້າບໍ່ມີປະຊາຊົນຊ່ວຍແຮງ, ແມ່ນເຮັດບໍ່ໄດ້.

3. ຕ້ອງຈັດຕັ້ງການກວດກາ ແລະ ຖ້າຢາກກວດກາໃຫ້ຖືກ ກໍຕ້ອງມີປະຊາຊົນຊ່ວຍແຮງຈຶ່ງໄດ້.

ຜູ້ນຳນັ້ນພຽງແຕ່ເຫັນໜ້າດຽວຂອງວຽກງານ ແລະ ຂອງປະຊາຊົນ ການປ່ຽນແປງຂອງທຸກຄົນ, ເພາະເບິ່ງທາງເທິງລົງ. ເພາະສະນັ້ນ ສິ່ງທີ່ມອງເຫັນນັ້ນມີຂອບເຂດຈຳກັດ.

ກົງກັນຂ້າມ, ປະຊາຊົນຊ້ຳພັດມອງເຫັນວຽກງານ ແລະ ເຫັນການປ່ຽນແປງຂອງຄົນໃນດ້ານອື່ນ. ເຂົາເຈົ້າມອງເຫັນແຕ່ທາງລຸ່ມຂຶ້ນ. ດັ່ງນັ້ນ ການມອງເຫັນນີ້ມີຂອບເຂດຈຳກັດຄືກັນ. ເພາະໃຊ້ບົດຮຽນ ສະນັ້ນ ຖ້າຢາກແກ້ໄຂບັນຫາໃຫ້ຖືກຕ້ອງນັ້ນ ຈຳເປັນຕ້ອງລວມບົດຮຽນຂອງທັງສອງຝ່າຍເຂົ້າກັນ. ຖ້າຢາກເຮັດໄດ້ແນວນັ້ນ ຜູ້ນຳຕ້ອງມີການພົວພັນໃກ້ຊິດລະຫວ່າງຕົນເອງກັບທຸກຊົນຊັ້ນ ແລະ ກັບປະຊາຊົນທັງມວນ, ຮັກສາສາຍພົວພັນໃກ້ຊິດກັບປະຊາຊົນ, ໝັ່ນຫງ່ຽງຫູຟັງຄຳເຫັນຂອງປະຊາຊົນ, ນັ້ນແມ່ນພື້ນຖານແຫ່ງກຳລັງຂອງພັກ ແລະ ອາໄສອັນນັ້ນພັກຈຶ່ງມີໄຊຊະນະ.

ເພາະສະນັ້ນ, ຫ່າງໄກຈາກປະຊາຊົນ ບໍ່ພົວພັນໃກ້ຊິດກັບປະຊາຊົນນັ້ນແມ່ນເປັນຄືຄ້າງເຄິ່ງເຄິ່ງຢູ່ເທິງອາກາດ, ເປັນແນວນັ້ນ ເດັດຂາດຕ້ອງປະລາໄຊ.

ອ່ານຕໍ່ສະບັບໜ້າ...




# ອະນຸເຄາະ – ສົງເຄາະ

ອະນຸເຄາະ ແລະ ສົງເຄາະ ເປັນສອງຄຳທີ່ມີຄວາມໝາຍໃກ້ຄຽງກັນ ແຕ່ໃຊ້ຄື ແລະ ຕ່າງກັນ ດັ່ງນີ້:

'ອະນຸເຄາະ' ເປັນຄຳກິລິຍາ ມາຈາກເຄົ້າຂະແມ (ອະນຸຄໂຣະ) ເຊິ່ງກໍໄດ້ເຄົ້າມາຈາກພາສາສັນສະກິດ Anugraha (ອະນຸຄຣະຫະ) ແລະພາສາປາລີ Anugaha 'ອະນຸຄະຫະ' ແລ້ວແຜງສຽງມາເປັນຄຳລາວວ່າ 'ອະນຸເຄາະ' ໝາຍເຖິງ "ຊ່ວຍເຫຼືອ, ເກື້ອກູນ" ເຊັ່ນ

- ເດັກນ້ອຍດ້ອຍໂອກາດໄດ້ຮັບຄວາມອະນຸເຄາະຈາກພາກສ່ວນຕ່າງໆ.
- ເພິ່ນໄດ້ຊ່ວຍອະນຸເຄາະເຂົ້າສານສອງເປົ໋າໃຫ້ແກ່ຄອບຄົວທຸກຍາກ.
- ຂອບໃຈທ່ານຫຼາຍໆທີ່ໃຫ້ຄວາມອະນຸເຄາະແກ່ພວກຂ້າພະເຈົ້າຄັ້ງນີ້.
- ຂໍຂອບໃຈ ພໍ່ແມ່ຄູບາອາຈານທີ່ໄດ້ອະນຸເຄາະສິ່ງເສີມຊ່ວຍເຫຼືອ.

'ສົງເຄາະ' ເປັນໄດ້ທັງຄຳນາມ ແລະຄຳກິລິຍາ ມາຈາກເຄົ້າຂະແມ (ສັງຄໂຣະ) ເຊິ່ງກໍໄດ້ເຄົ້າມາຈາກປາລີ-ສັນສະກິດ Saṅgaha (ສັງຄະຫະ) Saṅgraha (ສັງຄຣະຫະ) ແລ້ວແຜງສຽງເປັນຄຳລາວວ່າ 'ສົງເຄາະ' ທີ່ໝາຍເຖິງ "ການຊ່ວຍເຫຼືອຊຸ້ອານຊູ, ອຸດໜູນໃຫ້ແກ່ຜູ້ຂາດເຂີນ" ເຊັ່ນ

- ປະຊາຊົນຜູ້ໃຈບຸນໄດ້ສົງເຄາະຜູ້ປະສົບເຄາະຮ້າຍ.
- ພາກວິຊາສັງຄົມສົງເຄາະ ແລະ ການພັດທະນາ ຄະນະວິທະຍາສາດສັງຄົມ
- ວຽກງານສັງຄົມສົງເຄາະໄດ້ຮັບການຊ່ວຍເຫຼືອເຄື່ອງອຸປະໂພກ ແລະ ບໍລິໂພກຈາກພາຍໃນກະຊວງແຮງງານສະຫວັດດີການສັງຄົມ.



# ຂຽນຄຳລາວໃຫ້ຖືກ

\#ຄູແສງ

| ອັກສອນສູງ | ອັກສອນຕ່ຳ |
| --- | --- |
| ຂະນະນີ້ | ຄະນະຜູ້ແທນ |
| ຂັດຂ້ອງ | ຄັດຄ້ານ |
| ຂັບລົດ | ຄັບແຄບ |
| ຫົວຂ່າ | ຄຸນຄ່າ |
| ກົ້ນຂາບ | ປາກຄາບ |
| ຂາດເງິນ | ຄາດນາ |
| ໝາກຂ່າງ | ໂຕຄ່າງ |
| ນາບຂູ່ | ໜຶ່ງຄູ່ |
| ແຂ່ງຂັນ | ແຄ່ງຂາ |

# ປູກຕົ້ນໄມ້ໃນວັນນີ້ ເພື່ອລູກຫຼານໃນວັນໜ້າ

ໂດຍ: ສີວັນ

(ເນື່ອງໃນໂອກາດວັນປູກຕົ້ນໄມ້ແຫ່ງຊາດ 1 ມິຖຸນາ 2024)



ປ່າໄມ້ແມ່ນຊັບພະຍາກອນທຳມະຊາດອັນລ້ຳຄ່າທີ່ມີລະບົບນິເວດສະເພາະ ເຊິ່ງປະກອບດ້ວຍຊີວະນາໆພັນ, ແຫຼ່ງນ້ຳ ແລະ ທີ່ດິນປ່າໄມ້ ໂດຍມີຕົ້ນໄມ້ນາໆຊະນິດທີ່ເກີດຂຶ້ນຕາມທຳມະຊາດ ຫຼື ປູກຂຶ້ນ ໃນພື້ນທີ່ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ. ປ່າໄມ້ທຳມະຊາດ ແລະ ທີ່ດິນປ່າໄມ້ເປັນກຳມະສິດຂອງວົງຄະນາຍາດແຫ່ງຊາດ ເຊິ່ງລັດຖະບານເປັນຜູ້ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບທົ່ວປະເທດ.

ລັດຖະບານ ໄດ້ກຳນົດເອົາວັນທີ 1 ມິຖຸນາ ເປັນວັນປູກຕົ້ນໄມ້ແຫ່ງຊາດ. ເພື່ອສ້າງສະຕິໃນການປົກປັກຮັກສາ, ພັດທະນາປ່າໄມ້, ທີ່ດິນປ່າໄມ້ ແລະ ສິ່ງແວດລ້ອມທຳມະຊາດ ໃຫ້ປະຊາຊົນບັນດາເຜົ່າ ແນໃສ່ເຮັດໃຫ້ປ່າໄມ້ອຸດົມສົມບູນ ແລະ ບໍ່ໃຫ້ບົກແຫ້ງຈັກເທື່ອ.

ນັບແຕ່ພັກ-ລັດຖະບານເຮົາ ໄດ້ກຳນົດເອົາວັນທີ 1 ມິຖຸນາ ເປັນວັນປູກຕົ້ນໄມ້ແຫ່ງຊາດເປັນຕົ້ນມາ, ຂະບວນປູກຕົ້ນໄມ້ ທັງພາກລັດ, ເອກະຊົນ ແລະ ປະຊາຊົນລາວບັນດາເຜົ່າໃນຂອບເຂດທົ່ວປະເທດ ຕາງກໍໄດ້ມີຄວາມຕື່ນຕົວເຂົ້າຮ່ວມການປູກຕົ້ນໄມ້ຊະນິດຕ່າງໆ ເພື່ອຮັບໃຊ້ຄອບຄົວ ແລະ ເປັນສິນຄ້າຢ່າງເປັນຂະບວນກວ້າງຂວາງ ເຮັດໃຫ້ເນື້ອທີ່ປ່າໄມ້ເພີ່ມຂຶ້ນຢ່າງຕໍ່ເນື່ອງ. ສຳລັບປີນີ້, ລັດຖະບານ ໄດ້ວາງຄາດໝາຍປູກຕົ້ນໄມ້ໃຫ້ໄດ້ 3.500 ເຮັກຕາ ໃນຂອບເຂດທົ່ວປະເທດ. ຕາມການຖະແຫຼງຂ່າວຂອງທ່ານ ລິນຄຳ ດວງສະຫວັນ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ໃນວັນທີ 27 ພຶດສະພາຜ່ານມາ. ພັກ ແລະ ລັດຖະບານ ໄດ້ກຳນົດເອົາ ວັນທີ 1 ມິຖຸນາ ຂອງທຸກໆປີ ເປັນວັນປູກຕົ້ນໄມ້ແຫ່ງຊາດ ເຊິ່ງກົງກັບວັນເດັກນ້ອຍສາກົນ ເພື່ອປູກຈິດສຳນຶກໃຫ້ແກ່ເຍົາວະຊົນ ແລະ ອະນຸຊົນ ກໍຄືທົ່ວສັງຄົມ ໃຫ້ເຫັນໄດ້ເຖິງຄວາມສຳຄັນຂອງປ່າໄມ້, ການປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້ ຕາມທິດພັດທະນາການເຕີບໂຕສີຂຽວ ແລະ ຍືນຍົງ ຂອງອົງການສະຫະປະຊາຊາດ.

ປ່າໄມ້ມີຄວາມສຳຄັນທີ່ສຸດຕໍ່ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດໂດຍທາງກົງ ແລະ ທາງອ້ອມ, ໃນການປົກປັກຮັກສາດິນ, ແຫຼ່ງນ້ຳແລະຊີວະນາໆພັນໃຫ້ມີຄວາມອຸດົມສົມບູນ, ປ້ອງກັນການປ່ຽນແປງດິນຟ້າອາກາດ. ປ່າໄມ້ ໄດ້ປະກອບສ່ວນຢ່າງຫຼວງຫຼາຍ ຕໍ່ການພັດທະນາກະສິກຳ ແລະ ປ່າໄມ້ ຕິດພັນກັບອຸດສາຫະກຳ, ການບໍລິການ ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ, ການພັດທະນາຊົນນະບົດ ແກ້ໄຂຄວາມທຸກຍາກເປັນກ້າວໆ. ປະທານ ໄກສອນ ພົມວິຫານ ຜູ້ນຳທີ່ແສນເຄົາລົບຮັກເຄີຍກ່າວໄວ້ວ່າ" "ປ່າໄມ້ຄືຄຳຂຽວຂອງຊາດ". ດັ່ງນັ້ນ ພວກເຮົາທຸກຄົນຕ້ອງເປັນເຈົ້າການ ແລະ ຮ່ວມກັນປົກປັກຮັກປ່າໄມ້ໃຫ້ມີຄວາມຍືນຍົງຕະຫຼອດໄປ.

ເພື່ອເປັນການປູກຈິດສຳນຶກໃຫ້ທົ່ວສັງຄົມ ໃນການສົ່ງເສີມປູກໄມ້ ແລະ ຟື້ນຟູປ່າແບບທຳມະຊາດໃຫ້ກວ້າງຂວາງ, ບັນລຸຕາມແຜນການທີ່ວາງໄວ້, ກະຊວງກະສິກຳ ແລະ ປ່າໄມ້ ໄດ້ອອກແຈ້ງການ ສະບັບເລກທີ 2523/ກປ, ລົງວັນທີ 8 ພຶດສະພາ 2024 ເພື່ອເປັນການສ້າງຂະບວນການປູກຕົ້ນໄມ້ເນື່ອງໃນວັນປູກຕົ້ນໄມ້ແຫ່ງຊາດ ວັນທີ 1 ມິຖຸນາ 2024.

ເພື່ອຍາກບັນລຸຕາມຄາດໝາຍສູ້ຊົນທີ່ວາງໄວ້ນັ້ນ ຮຽກຮ້ອງມາຍັງທົ່ວປວງຊົນທັງຊາດ ຈົ່ງເຊີດຊູສະຕິຮັກຊາດ ແລະ ຫວງແຫນປ່າໄມ້ປະກອບສ່ວນຕາມເງື່ອນໄຂຄວາມສາມາດເຂົ້າຮ່ວມ ໃນການປູກໄມ້, ຟື້ນຟູປ່າໄປຄຽງຄູ່ກັບການຄຸ້ມຄອງປົກປັກຮັກສາປ່າໄມ້ ເຊິ່ງເປັນມໍລະດົກຂອງຊາດໃຫ້ນັບມື້ອຸດົມສົມບູນແລະສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການວັດຖຸດິບດ້ານໄມ້ ແລະ ຜະລິດຕະພັນປ່າໄມ້ໄດ້ຢ່າງຍືນນານ ບໍ່ມີວັນບົກແຫ້ງ ເຮັດໃຫ້ຊັບພະຍາກອນປ່າໄມ້ກາຍເປັນສ່ວນປະກອບອັນສຳຄັນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ເປັນການປົກປັກຮັກສາສິ່ງແວດລ້ອມນັບມື້ຂະຫຍາຍຕົວຂຶ້ນເລື້ອຍໆ. ຄຳຂວັນຂອງວັນປູກຕົ້ນໄມ້ແຫ່ງຊາດປີນີ້ຄື: "ປູກຕົ້ນໄມ້ໃນວັນນີ້ ເພື່ອລູກຫຼານ ໃນວັນໜ້າ".



# ເອົາໃຈໃສ່ສຶກສາອົບຮົມເດັກໃຫ້ເປັນຄົນດີຂອງຊາດ ຜູ້ສືບທອດພາລະກິດຂອງປະເທດຊາດ

ໂດຍ: ສີວັນ

(ເນື່ອງໃນໂອກາດວັນເດັກນ້ອຍສາກົນ 1 ມິຖຸນາ 2024)



ວັນທີ 1 ມິຖຸນາ ແມ່ນວັນເດັກສາກົນ ເຊິ່ງໃນແຕ່ລະປີ ພັກ-ລັດ ໄດ້ຖືເອົາໂອກາດດັ່ງກ່າວຈັດຕັ້ງການສະເຫຼີມສະຫຼອງວັນເດັກນ້ອຍສາກົນ ດ້ວຍຮູບການຕ່າງໆ ໂດຍມີຈຸດປະສົງໃນການປູກຈິດສຳນຶກທົ່ວປວງຊົນໃຫ້ລະນຶກເຖິງຄວາມສຳຄັນຂອງເດັກ ແລະ ເຫັນໄດ້ສະພາບຂອງເດັກລາວບັນດາເຜົ່າກັບເດັກຊາດອື່ນໆໃນພາກພື້ນ ແລະ ໃນໂລກ.

ພັກ-ລັດຖະບານລາວຍາມໃດກໍໃຫ້ຄວາມສຳຄັນ ແລະ ເອົາໃຈໃສ່ຢ່າງຕັ້ງໜ້າ ໃນການຊຸກຍູ້, ພັດທະນາ ແລະ ສົ່ງເສີມເດັກນ້ອຍລາວໃຫ້ເຕີບໃຫຍ່ ໃນສະພາບແວດລ້ອມທີ່ມີຄວາມປອດໄພ, ໄດ້ຮັບການສຶກສາ, ການບໍລິການສຸຂະພາບໃນຂັ້ນພື້ນຖານທີ່ດີ. ລັດຖະບານ ເຫັນຄວາມສຳຄັນຂອງເດັກ ຕໍ່ການປົກປັກຮັກສາ ແລະ ພັດທະນາປະເທດຊາດ. ລັດ ມີຄວາມຮັບຜິດຊອບວາງນະໂຍບາຍກ່ຽວກັບວຽກງານສຶກສາອົບຮົມ ແລະ ກໍ່ສ້າງໃຫ້ເດັກມີນ້ຳໃຈຮັກຊາດ, ບ້ານເກີດເມືອງນອນ, ສ້າງແລະຂະຫຍາຍໂຮງຮຽນສາມັນ, ໂຮງຮຽນວິຊາຊີບ, ສະຖານທີ່ເບິ່ງແຍງປິ່ນປົວໃຫ້ພຽງພໍ, ສົ່ງເສີມໃຫ້ເດັກມີສ່ວນຮ່ວມ ໃນການເຄື່ອນໄຫວທາງສັງຄົມ, ສ້າງ ແລະ ປັບປຸງມາດຕະການ ໃນການປົກປ້ອງເດັກຈາກການຂູດຮີດ, ການປະລະ, ການທາລຸນ ແລະ ອື່ນໆ.

ພ້ອມດຽວກັນນີ້, ສັງຄົມແລະຜູ້ປົກຄອງຍິ່ງມີຄວາມຮັບຜິດຊອບ ປະກອບສ່ວນສ້າງ ແລະ ພັດທະນາເດັກ ທາງດ້ານຮ່າງກາຍ, ສະຕິປັນຍາ, ເບິ່ງແຍງລ້ຽງດູເດັກໃຫ້ເຕີບໃຫຍ່, ເອົາໃຈໃສ່ຄວາມປອດໄພຂອງເດັກ, ຮັບປະກັນໃຫ້ເດັກ ໄດ້ຮັບການຮັກສາສຸຂະພາບຂັ້ນພື້ນຖານ, ຊຸກຍູ້, ສົ່ງເສີມ, ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ເດັກໄດ້ເຂົ້າໂຮງຮຽນ, ສຶກສາອົບຮົມເດັກໃຫ້ເປັນຄົນດີຂອງຄອບຄົວ, ສັງຄົມ ແລະ ສືບທອດພາລະກິດຂອງປະເທດຊາດ.

ເດັກ ໝາຍເຖິງບຸກຄົນທີ່ມີອາຍຸຕ່ຳກວ່າ 18 ປີ. ເຖິງວ່າເດັກ ຈະມີອາຍຸນ້ອຍກໍຕາມ, ແຕ່ພວກເຂົາກໍມີສິດທິເໝືອນກັບຜູ້ໃຫຍ່ທົ່ວໄປ. ພວກເຂົາກໍມີສິດດຳລົງຊີວິດຢ່າງປອດໄພ ແລະໄດ້ຮັບການພັດທະນາທາງດ້ານຮ່າງກາຍ ແລະ ຈິດໃຈຢ່າງເໝາະສົມ, ໄດ້ຮັບການຈົດທະບຽນການເກີດ, ການຕັ້ງຊື່-ນາມສະກຸນ ແລະ ໄດ້ສັນຊາດ, ຖືກຮັບຮູ້ແລະໄດ້ຮັບການເບິ່ງແຍງດູແລຈາກພໍ່ແມ່ຜູ້ປົກຄອງ, ໄດ້ຮັບການເບິ່ງແຍງທາງດ້ານສຸຂະພາບ, ການປິ່ນປົວ ແລະ ຟື້ນຟູສຸຂະພາບໃນເວລາເຈັບເປັນ, ໄດ້ຮັບການສຶກສາ ເພື່ອໃຫ້ມີຄຸນສົມບັດ, ຄວາມຮູ້, ຄວາມສາມາດ, ພອນສະຫວັນ ການສ້າງວິຊາຊີບ, ສີມືແຮງງານແລະມີວຽກເຮັດງານທຳ, ປາກເວົ້າ, ສະແດງຄຳຄິດຄຳເຫັນ, ພົບປະແລະແລກປ່ຽນບົດຮຽນທີ່ດີກັບເດັກດ້ວຍກັນ. ເຂົ້າຮ່ວມກິດຈະກຳທາງສັງຄົມ, ສິລະປະວັນນະຄະດີ, ກິລາກາຍະກຳ ແລະ ການພັກຜ່ອນທີ່ເໝາະສົມກັບໄວອາຍຸຂອງເດັກ, ໄດ້ຮັບຂໍ້ມູນຂ່າວສານ ທີ່ມີເນື້ອໃນທີ່ເໝາະສົມກັບໄວອາຍຸ ແລະ ລະດັບການພັດທະນາຂອງເດັກ, ໄດ້ຮັບການປົກປ້ອງຈາກທຸກຮູບການທາລຸນທາງດ້ານຮ່າງກາຍ ແລະ ຈິດໃຈຕໍ່ເດັກ, ໄດ້ຮັບການປົກປ້ອງພິເສດ ໃນຂະບວນການຍຸຕິທຳ.

ເດັກມີບົດບາດສຳຄັນໃນຊີວິດສັງຄົມ. ນອກຈາກເດັກຈະເປັນລູກຮັກຫຼານແພງຂອງຄອບຄົວ, ຊຸມຊົນ ແລະ ສັງຄົມ ແລ້ວເດັກຍັງເປັນຕົວແທນຂອງການປ່ຽນແປງ ເພື່ອສືບທອດການພັດທະນາ ແລະ ສ້າງສາປະເທດ ໃນອະນາຄົດຢ່າງໝັ້ນຄົງ. ດັ່ງນັ້ນ, ທົ່ວສັງຄົມ ຈົ່ງຍົກສູງຄວາມຮັບຜິດຊອບຂອງຕົນ ແລະ ເພີ່ມທະວີອອກແຮງຈັດຕັ້ງປະຕິບັດວຽກງານກ່ຽວກັບເດັກ ເພື່ອຮັບປະກັນການເບິ່ງແຍງດູແລເອົາໃຈໃສ່, ການພັດທະນາ, ການປົກປ້ອງແລະການມີສ່ວນຮ່ວມຂອງເດັກນ້ອຍ ທີ່ເປັນລູກຫຼານຂອງພວກເຮົາ ໃຫ້ມີໄວເດັກທີ່ສົດໃສ ເພື່ອກ້າວເປັນຜູ້ໃຫຍ່ທີ່ມີອະນາຄົດໃນວັນຂ້າງໜ້າ, ເປັນກຳລັງຕົ້ນຕໍຂອງຊາດ ໃນການປະກອບສ່ວນນຳເອົາປະເທດໃຫ້ຫຼຸດພົ້ນຈາກຄວາມດ້ອຍພັດທະນາ.

ດັ່ງນັ້ນ, ພໍ່ແມ່ ກໍຄືຜູ້ປົກຄອງ ແລະ ສັງຄົມ ຕ້ອງໃຫ້ຄວາມສຳຄັນ ແລະ ອົບອຸ່ນແກ່ເດັກດ້ວຍຄວາມໃກ້ຊິດ, ຮັກແພງ, ສຶກສາອົບຮົມ, ຊ່ວຍເຫຼືອເພື່ອພັດທະນາທາງດ້ານຮ່າງກາຍ, ຈິດໃຈແລະສະໝອງຂອງເດັກ. ຂະນະດຽວກັນ, ເດັກ ກໍຕ້ອງເຄົາລົບນັບຖືພໍ່ແມ່, ຜູ້ປົກຄອງ, ສະມາຊິກພາຍໃນຄອບຄົວ, ຄູ-ອາຈານ, ຜູ້ອາຍຸສູງ, ເຄົາລົບສິດຂອງຄົນອື່ນ, ຊ່ວຍເຫຼືອພໍ່ແມ່, ຄອບຄົວ, ໝູ່ເພື່ອນ ແລະ ຜູ້ອາຍຸສູງຕາມຄວາມສາມາດ, ດຸໝັ່ນຮ່ຳຮຽນ, ເຄົາລົບ ແລະ ປະຕິບັດກົດລະບຽບຂອງໂຮງຮຽນ ຢ່າງເຂັ້ມງວດ. ນັບຖືວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ, ຕ້ອງຫ່າງໄກຢາເສບຕິດ, ຫຼີກເວັ້ນການມົ້ວສຸມສິ່ງລາມົກ, ອະນາຈານຕ່າງໆແລະຫຼິ້ນການພະນັນທຸກປະເພດ. ຕັ້ງໜ້າໃນການຝຶກຝົນຫຼໍ່ຫຼອມຕົນເອງໃຫ້ກາຍເປັນຜູ້ໃຫຍ່ທີ່ມີຄວາມຮູ້, ຄວາມສາມາດ, ຄວາມຮັບຜິດຊອບ ແລະ ຄຸນສົມບັດສິນທຳປະຕິວັດ ເພື່ອສືບຕໍ່ໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດໃນອະນາຄົດ.



## ສຸກສະບາຍທາຍໂລດາ

# ປະໂຫຍດຂອງນ້ຳຕໍ່ຮ່າງກາຍ

ໂດຍ: ທິວກະທິ



ນອກຈາກອາຫານຫຼັກ 5 ໝູ່ ແລະ ສານອາຫານອື່ນໆ ນ້ຳກໍເປັນສິ່ງສຳຄັນທີ່ຮ່າງກາຍຂາດບໍ່ໄດ້ ເຮົາສາມາດອົດອາຫານໄດ້ຫຼາຍມື້ ຫຼື ເປັນອາທິດ ແຕ່ຖ້າເຮົາຂາດນ້ຳຈະຢູ່ໄດ້ພຽງ 2-3 ວັນເທົ່ານັ້ນ ເພາະຮ່າງກາຍຂອງຄົນເຮົາປະກອບດ້ວຍນ້ຳ 60-75% ຫຼື 3 ໃນ 4 ຂອງນ້ຳໜັກຮ່າງກາຍຂອງເຮົາ; ການດື່ມນ້ຳ ຊາ, ກາເຟ, ນ້ຳໝາກໄມ້ ແລະ ເຄື່ອງດື່ມຕ່າງໆ ກໍເປັນອີກທາງໜຶ່ງທີ່ຈະໄດ້ນ້ຳ; ນອກຈາກນັ້ນ, ການເຜົາຜານອາຫານໃຫ້ເປັນພະລັງງານ ກໍແມ່ນການໄດ້ນ້ຳເຂົ້າສູ່ໃນຮ່າງກາຍເຊັ່ນດຽວກັນ.

ນ້ຳມີຄວາມສຳຄັນຕໍ່ລະບົບການຍ່ອຍອາຫານ ສານອາຫານຕ່າງໆ ຕ້ອງລະລາຍນ້ຳກ່ອນຈຶ່ງຈະຜ່ານເຍື່ອຫຸ້ມລຳໄສ້ເຂົ້າສູ່ຮ່າງກາຍຕາມກະແສເລືອດ ແລະ ຫຼອດນ້ຳເຫຼືອງໄດ້, ນ້ຳຊ່ວຍໃນການຂັບຖ່າຍສານອາຫານທີ່ຮ່າງກາຍບໍ່ຕ້ອງການອອກຈາກຮ່າງກາຍ ແລະ ຍັງຊ່ວຍຮັກສາລະດັບອຸນຫະພູມຂອງຮ່າງກາຍ, ນ້ຳຢູ່ໃນຮ່າງກາຍຈະຖືກຂັບອອກເປັນເຫື່ອ ແລະ ປັດສະວະທຸກມື້; ສະນັ້ນ, ເຮົາຈຶ່ງຕ້ອງດື່ມນ້ຳໃຫ້ພຽງພໍເພື່ອໄປທົດແທນນ້ຳທີ່ຖືກຂັບຖ່າຍອອກ ແລະ ເພື່ອຫຼໍ່ລ້ຽງຮ່າງກາຍໃຫ້ສົດຊື່ນສົມບູນ. ສະນັ້ນ, ຈຶ່ງເວົ້າໄດ້ວ່ານ້ຳມີປະໂຫຍດຕໍ່ຮ່າງກາຍຫຼາຍ ດັ່ງນີ້:

1. ຊ່ວຍໃຫ້ຜິວໜັງສົດຊື່ນ;

2. ຊ່ວຍໃຫ້ປະຕິກິລິຍາເຄມີ ແລະ ການເຜົາຜານອາຫານໃນຮ່າງກາຍ ເປັນໄປຕາມປົກກະຕິ;

3. ຊ່ວຍໃຫ້ສານອາຫານໄປລ້ຽງສ່ວນຕ່າງໆຂອງຮ່າງກາຍ ແລະ ຊ່ວຍໃນການຂັບຖ່າຍຂອງເສຍອອກຈາກຮ່າງກາຍ;

4. ຊ່ວຍໃນການສະສົມອາຫານ ເຊັ່ນ: ໄຂມັນ ຫຼື ໂປຣຕີນ;

5. ຊ່ວຍຮັກສາລະດັບອຸນຫະພູມຂອງຮ່າງກາຍ.

ປະລິມານນ້ຳທີ່ຮ່າງກາຍຕ້ອງການຂຶ້ນຢູ່ກັບສະພາບດິນຟ້າອາກາດ, ຊະນິດຂອງອາຫານ ແລະ ສະພາບຂອງຮ່າງກາຍ ເຊັ່ນ: ເມື່ອຮັບປະທານອາຫານທີ່ມີໂປຣຕີນສູງ ຫຼື ເມື່ອເຫື່ອອອກຫຼາຍໃນຊ່ວງອາກາດຮ້ອນຮ່າງກາຍຈະເສຍນ້ຳຫຼາຍ ຈຶ່ງຕ້ອງການນ້ຳຫຼາຍກວ່າປົກກະຕິ; ເວລາເປັນໄຂ້ ຫຼື ຖອກທ້ອງ ຮ່າງກາຍກໍຕ້ອງການນ້ຳຫຼາຍຂຶ້ນຕາມປົກກະຕິຮ່າງກາຍຕ້ອງການນ້ຳ 1 ລິດຕໍ່ຊົ່ວໂມງ, 1 ແຄລໍຣີ ຂອງອາຫານທີ່ກິນ ຫຼື ປະມານມື້ໜຶ່ງ 6-8 ຈອກ ໂດຍຄິດລວມທັງອາຫານ ແລະ ເຄື່ອງດື່ມດ້ວຍ ການດື່ມນ້ຳຫຼາຍເກີນໄປບໍ່ເກີດໂທດແຕ່ປະການໃດ.

**ຂໍ້ມູນຈາກ: www.lnr.org.la**



## ອາດ ກະວີລາວ

# ປູກປ່າໄມ້ ປູກຈິດສຳນຶກ

**# ລູກທາດສາມປາງ**

| | |
|---|---|
| ❊ ປ່າໄມ້ຄຸນຄ່າລ້ຳ | ຫຼາຍຢ່າງຄະນານັບ |
| ຊັບສົມບັດມູນມັງ | ຄ່າຄຸນຫຼາຍລົ້ນ |
| ໄພສົນດົງແດນໄມ້ | ຮັກສາດິນເຢັນຊຸ່ມ |
| ຊຸມໝູ່ສັດເພິ່ງຊົ້ນ | ຂະຫຍາຍເຊື້ອແຜ່ພັນ |
| ❊ ປ້ອງກັນດິນເຈື່ອນມ້າງ | ຮັກສາແຫຼ່ງສາຍທານ |
| ລຳລະຫານວັງເລິກ | ປ່າປົກບໍ່ເຂີນແຫ້ງ |
| ເປັນແຫຼ່ງຜັກຜະຫຼາໄມ້ | ອາຫານກິນເຕັມປ່າ |
| ພົງພະນາຂ່ວງແຄວ້ນ | ຄຸນລ້ຳຄ່າຫຼາຍ |
| ❊ ຄວນຮ່ວມປູກໄວ້ | ປະດັບປ່າຂຽວກະຈີ |
| ປູກໃຫ້ມີຫຼາຍພັນ | ອັ່ງອໍເຕັມດ້າວ |
| ຊາວໜຸ່ມເດັກໄວລຸ້ນ | ເຢົາວະຊົນນ້ອຍໃຫຍ່ |
| ປູກຝັງໃຈພໍ່ພ້ອມ | ດອມດ້ວຍຊ່ວຍຮັກສາ ປ່າໄມ້ເນີ |
| ❊ ປູກຝັງໃຈກໍ່ສ້າງ | ຈິດສຳນຶກແຕ່ເຍົາໄວ |
| ຮູ້ຮັກໄພພະນອມຂຽວ | ມິ່ງມູນເມືອງບ້ານ |
| ຢ່າຄິດຮານທຳລາຍໄມ້ | ພົງໄພລ້ຳຄ່າ |
| ຮ່ວມໃຈກັນເຝົ້າຮັກສາ | |
| ປົກປັກພືນປ່າໄມ້ | ຢ່າທຳຮ້າຍກົ່ນຖ່າງ ເຈົ້າເອີຍ! |



## ທັກທາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສົ້ມຫົ້ມຮຽນ**

❊ ***ສ່ຳ****ເລັດເສັດສິ້ນ ກອງປະຊຸມ****ຍົກສູງເບື້ອງໃນ****ເສົ້າໃນກອງປະຊຸມສະໄໝສາມັນ****ເທື່ອທີ 7*** *ຂອງສະພາແຫ່ງຊາດ ຊຸດທີ IX* ***ສສຊ*** *ວ່າເອົ້າ ຫຼາຍເລື່ອງບັນຫາ ບ່າສະເໜີຕໍ່ສະພາ ເພື່ອຫາວິທີແກ້ ຕີແຜ່ບັນຫາເງິນເຟີ້ ທັງອັດຕາແລກປ່ຽນ ຕາມສຽງປະຊາຮຽກຮ້ອງ ຮົງເຂດບ້ານຄືນຕົບ* ***ນັ້ນແລ້ວ!***

❊ ***ສະ****ບາຍດີອ້າຍເອື້ອຍ ເພື່ອນມິດແຟນທັກທາຍ ຫຼັງຫ່າງໄປດົນ ເພາະເຫດຜົນໄປ****ສຶກສາເພີ້ມ*** *ແລະ ຂໍຂອບໃຈມາຍັງ****ສາວຈົ້ນ*** *ຊ່ອຍສານສືບຕໍ່ ບັດນີ້ມາພົບພໍ້****ສາວສົ້ງມຫົ້ງຮຽນ****ດັ່ງເດີມ ແລ້ວບໍ່! ຂໍແຟນຄໍລຳຢ່າພ້າວແໜງໜ່າຍອາງປະ ໜັງສືພິມຜູ້ແທນປະຊາຊົນ ແລະ ຄໍລຳນີ້ ມີຫຍັງຂັດຂ້ອງ ໝອງໃຈອ່ານບໍ່ລ່ຽນ ຂຽນຈົດໝາຍບ່ອນບ້ອງ ຊິປັບແກ້ປ່ຽນແປງ* ***ທ່ານເອີຍ!***

## ຊອບຍົ້ມ

**# ແອ່ບຕຸ້ງ**

### ເລື່ອງ: ປະສົບການດຽວກັນ

ຫຼັງຈາກເສຍຊີວິດ ທ້າວກີກໍໄປພົບຈ່າຍົມພິບານ ເລີຍຖືກຊັກຖາມເລື່ອງປະຫວັດ

| | |
|---|---|
| **ຈ່າຍົມພິບານ:** | ໃນຊີວິດເຄີຍມີບັນຫາໃຫ້ອຸກໃຈແຮງບໍ່? |
| **ທ້າວກີ:** | ມີ |
| **ຈ່າຍົມພິບານ:** | ເລື່ອງຫຍັງ? |
| **ທ້າວກີ:** | ເມຍຕິດບ່າວນ້ອຍ |
| **ຈ່າຍົມພິບານ:** | ເຈົ້າເຮັດແນວໃດ? |
| **ທ້າວກີ:** | ຊິເຮັດແນວໃດໄດ້ແຕ່ໄຫ້ |
| **ຈ່າຍົມພິບານ:** | ຂ້ອຍກະເຄີຍພົບບັນຫານີ້ ຕອນເປັນມະນຸດ |
| **ທ້າວກີ:** | ທ່ານເຮັດແນວໃດ |
| **ຈ່າຍົມພິບານ:** | ຮ້ອາຍ ກູກະແປງພີໃນກ່າລະເອີຍ! |
| **ທ້າວກີ:** | ??? |



## ຄະຕິເຕືອນໃຈ

**# ດອກຫຍ້າ**

"ຢ່າລືມຄົນ ທີ່ຊ່ອຍສ້າງ ທາງຍິ່ງໃຫຍ່
ຢ່າລະເລີຍ ຄົນທີ່ເຄີຍ ມີນ້ຳໃຈ
ຢ່າລືມເປັນຜູ້ໃຫ້ ເມື່ອໄດ້ດີ"






# ຫວຽດນາມ ສະເໜີກົດໝາຍ ສວນອຸດສາຫະກຳ ເພື່ອດຶງດູດ ການລົງທຶນຄຸນນະພາບສູງ

ຂ່າວສານຫວຽດນາມ ລາຍງານເມື່ອວັນອັງຄານທີ 07 ພຶດສະພາຜ່ານມາວ່າ, ກະຊວງ ແຜນການ ແລະ ການລົງທຶນ ຂອງຫວຽດນາມ ໄດ້ສະເໜີຮ່າງ ກົດໝາຍວ່າດ້ວຍສວນອຸດສາ ຫະກຳ (industrial parks) ເພື່ອດຶງດູດການລົງທຶນໃຫ້ຫຼາຍ ຂຶ້ນກວ່າເກົ່າ.

ກົດໝາຍສະບັບໃໝ່ນີ້ ແນໃສ່ສ້າງເງື່ອນໄຂທີ່ຟົດຟື້ນ ໃຫ້ແກ່ຫວຽດນາມໃນການສ້າງ ບັນດາເຂດອຸດສາຫະກຳຂະໜາດ ໃຫຍ່ ແລະ ສີຂຽວ ທີ່ສາມາດດຶງ ດູດກະແສເງິນລົງທຶນທີ່ມີຄຸນນະ ພາບສູງໄດ້.

ນະໂຍບາຍສິ່ງຈູງໃຈ ໄດ້ ຖືກລວມເຂົ້າໃນກົດໝາຍດັ່ງ ກ່າວ ເພື່ອສົ່ງເສີມການພັດທະ ນາສວນອຸດສາຫະກຳ, ໂດຍສຸມ ໃສ່ສວນອຸດສາຫະກຳທີ່ມີຄວາມ ຊຳນານສູງ ແລະ ທັນສະໄໝ, ເຊິ່ງສາມາດດຶງດູດການລົງທຶນ ໃນຂົງເຂດຕ່າງໆເຊັ່ນ: ເສດຖະ ກິດດິຈິຕອນ ແລະ ສີຂຽວ, ຊິບ (chip), ເຊມິຄອນດັກເຕີ (semiconductor) ແລະ ອຸດ ສາຫະກຳວັດສະດຸນະວັດຕະກຳ.

ກະຊວງແຜນການແລະ ການລົງທຶນ ໄດ້ສະເໜີນະໂຍ ບາຍບຸລິມະສິດທີ່ກ່ຽວຂ້ອງກັບ ພາສີ, ຄ່າທຳນຽມ ແລະ ການ ລົງທຶນໃນເຂດເຫຼົ່ານີ້.

ກະຊວງດັ່ງກ່າວໃຫ້ຮູ້ວ່າ: ປັດຈຸບັນ, ຫວຽດນາມ ມີສວນ ອຸດສາຫະກຳ 416 ແຫ່ງ ແລະ ກຸ່ມອຸດສາຫະກຳຫຼາຍກວ່າ 1,000 ກຸ່ມ, ເຊິ່ງຊ່ວຍປະກອບ ສ່ວນປະມານເຄິ່ງໜຶ່ງຂອງມູນ ຄ່າການສົ່ງອອກຂອງປະເທດ.

# ລັດຖະສະພາຍີ່ປຸ່ນ ຜ່ານກົດໝາຍ ລ້ຽງດູລູກຮ່ວມກັນຫຼັງຈາກປະຮ້າງ



ເມື່ອວັນສຸກທີ 18 ພຶດ ສະພາຜ່ານມາ, ລັດຖະສະພາຍີ່ ປຸ່ນ (National Diet) ໄດ້ມີ ມະຕິຜ່ານຮ່າງກົດໝາຍປັບປຸງ ບາງເນື້ອໃນຂອງປະມວນກົດ ໝາຍແພ່ງວ່າດ້ວຍຄອບຄົວເປັນ ຄັ້ງທຳອິດໃນຮອບ 77 ປີ ໂດຍ ຈະເປີດໂອກາດໃຫ້ຄູ່ສົມລົດທີ່ ປະຮ້າງກັນ ແລະ ມີລູກ ສາມາດ ລ້ຽງດູລູກຮ່ວມກັນ ຫາກສາ ມາດບັນລຸຂໍ້ຕົກລົງລະຫວ່າງ ສອງຝ່າຍ, ຖ້າວ່າບໍ່ສາມາດບັນ ລຸຂໍ້ຕົກລົງຮ່ວມກັນໄດ້ ສານ ຄອບຄົວຈະເຂົ້າມາເປັນຜູ້ໄກ່ ເກ່ຍແລະຕັດສິນວ່າຈະໃຫ້ລ້ຽງ ດູລູກຮ່ວມກັນ ຫຼື ລ້ຽງດູລູກ ແຕ່ພຽງຝ່າຍດຽວ; ນອກຈາກ ນີ້, ຖ້າພໍ່ ຫຼື ແມ່ ມີປະຫວັດການ ໃຊ້ຄວາມຮຸນແຮງຕໍ່ລູກ, ກົດ ໝາຍໄດ້ກຳນົດສິດຂາດໃນການ ລ້ຽງລູກເປັນຂອງຝ່າຍທີ່ບໍ່ມີປະ ຫວັດແຕ່ພຽງຜູ້ດຽວ.

ຕະຫຼອດໄລຍະເວລາ ຫຼາຍທົດສະວັດທີ່ຜ່ານມາ, ສິດ ທາງກົດໝາຍໃນການລ້ຽງດູລູກ ມັກຈະເປັນຂອງແມ່ ເມື່ອຜົວ ເມຍປະຮ້າງກັນ ໂດຍຝ່າຍທີ່ ເຫັນດ້ວຍໃຫ້ເຫດຜົນສະໜັບ ສະໜູນວ່າເພື່ອຫຼຸດຜ່ອນຄວາມ ສ່ຽງຂອງເດັກນ້ອຍແລະເຍົາວະ ຊົນ ທີ່ຈະກາຍເປັນຜູ້ເຄາະຮ້າຍ ຈາກການໃຊ້ຄວາມຮຸນແຮງພາຍ ໃນຄອບຄົວ ແລະ ການລ່ວງລະ ເມີດທາງເພດ; ເຖິງແນວໃດກໍ ຕາມ, ຫວ່າງມໍ່ໆມານີ້, ໄດ້ມີຄຳ ເຫັນຈາກຫຼາຍຝ່າຍເພີ່ມຂຶ້ນວ່າ ການມອບສິດທາງກົດໝາຍໃຫ້ ແກ່ຝ່າຍໃດຝ່າຍໜຶ່ງຢ່າງເດັດ ຂາດໃນການລ້ຽງດູລູກ ມັນຄືກັບ ວ່າເດັກຖືກແຍກອອກຈາກຜູ້ ປົກຄອງອີກຄົນໜຶ່ງ ເຊິ່ງເປັນຜູ້ ຮ່ວມໃຫ້ກຳເນີດ ແລະ ອາດຈະ ສົ່ງຜົນກະທົບຕໍ່ສະພາບຈິດໃຈ ຂອງຜູ້ເປັນລູກໃນໄລຍະຍາວ.

ກົດໝາຍສະບັບປັບປຸງ ດັ່ງກ່າວ ຈະມີຜົນບັງຄັບໃຊ້ພາຍ ໃນສອງປີນັບຈາກການປະກາດ ໃຊ້ ແລະ ຈະມີຜົນສັກສິດຍ້ອນ ຫຼັງກັບຜູ້ທີ່ໄດ້ປະຮ້າງແລ້ວ.

ສະຖິຕິຂອງລັດຖະບານ ຍີ່ປຸ່ນໃນປີ 2022 ພຽງປີດຽວ ຊີ້ໃຫ້ເຫັນວ່າ ເດັກນ້ອຍປະມານ 160,000 ຄົນ ໄດ້ຮັບຜົນກະ ທົບຈາກການປະຮ້າງຂອງພໍ່ແມ່ ເຊິ່ງເພີ່ມຂຶ້ນສອງເທົ່າທຽບໃສ່ ປີ 1950.

**ແຫຼ່ງຂ່າວ:** Kyodo News

# ລັດຖະສະພາອີຣັກ ລົ້ມເຫຼວ ໃນການເລືອກຕັ້ງປະທານຜູ້ໃໝ່



ເວັບໄຊຂ່າວສານຊິນ ຮວາ ລາຍງານເມື່ອວັນເສົາທີ 18 ພຶດສະພາຜ່ານມາວ່າ: ສະ ພາຜູ້ແທນປະຊາຊົນ ຫຼື ລັດຖະ ສະພາຂອງອີຣັກ ລົ້ມເຫຼວໃນ ການເລືອກຕັ້ງປະທານລັດຖະ ສະພາຜູ້ໃໝ່ ເນື່ອງຈາກການຜິດ ຖຽງກັນລະຫວ່າງກຸ່ມການເມືອງ ໃນລັດຖະສະພາ.

ທ່ານ ໂມເຊນ ອັນ-ມານດາລາວີ (Mohsen al-Mandalawi) ຮັກສາການປະ ທານລັດຖະສະພາປະກາດເລື່ອນ ການປະຊຸມອອກໄປຈົນກວ່າຈະ ມີແຈ້ງການເພີ່ມຕື່ມ, ຫຼັງຈາກ ການລົງຄະແນນສຽງຮອບທີ 3 ສິ້ນສຸດລົງດ້ວຍຄວາມລົ້ມແຫຼວ.

ທ່ານ ອັນ-ມານດາລາວີ ເປັນປະທານກອງປະຊຸມ ໂດຍ ມີສະມາຊິກລັດຖະສະພາ 311 ຈາກທັງໝົດ 329 ທ່ານ ເຂົ້າ ຮ່ວມ ເພື່ອເລືອກປະທານຜູ້ໃໝ່ ມາແທນທ່ານ ໂມຮຳເໝັດ ອັນ-ຮານບູຊີ (Mohammed al-Halbousi) ທີ່ຖືກປົດອອກຈາກ ຕຳແໜ່ງເມື່ອ 6 ເດືອນກ່ອນ ເນື່ອງຈາກລະເມີດກົດໝາຍ.

ຕາມການຖະແຫຼງຂ່າວ ຂອງຫ້ອງການສື່ມວນຊົນລັດ ຖະສະພາ, ລັດຖະສະພາໄດ້ປະ ຊຸມຄັ້ງທຳອິດເພື່ອລົງຄະແນນ ສຽງໂດຍກົງຮອບທີ 2 ເຊິ່ງສະ ແດງໃຫ້ເຫັນວ່າ ທ່ານ ຊາລິມ ອັນ-ເອຊາວີ (Salimal-Esawi) ໄດ້ອັນດັບໜຶ່ງດ້ວຍຄະແນນ 158 ສຽງ, ຮອງລົງມາແມ່ນ ທ່ານ ມາມູດ ອັນ-ມາຊາດານີ (Mahmoud al-Mashhadani) ອະດີດປະທານລັດຖະສະພາດ້ວຍ ຄະແນນ 137 ສຽງ; ການລົງ ຄະແນນສຽງຮອບທີ 2 ມີຂຶ້ນຫຼັງ ຈາກລັດຖະສະພາລົ້ມເຫຼວໃນ ຮອບທຳອິດ ເມື່ອວັນທີ 14 ມັງ ກອນ 2024 ເພື່ອເລືອກເອົາປະ ທານລັດຖະສະພາຜູ້ໃໝ່.

ອີງຕາມກົດໝາຍຂອງ ອີຣັກ, ຖ້າຫາກຜູ້ສະໝັກຮັບ ເລືອກຕັ້ງບໍ່ສາມາດໄດ້ຮັບຄະ ແນນສຽງສ່ວນຫຼາຍໃນລັດຖະ ສະພາ ກໍຄື 50 ເປີເຊັນ ບວກ 1 ຫຼື 166 ຄະແນນສຽງ, ຈະມີ ການລົງຄະແນນສຽງໂດຍກົງປິດ ລັບອີກຄັ້ງ ສຳລັບຜູ້ສະໝັກທີ່ ເຂົ້າແຂ່ງຂັນ.

ເນື່ອງຈາກບໍ່ມີຜູ້ສະໝັກ ຮັບເລືອກຕັ້ງໄດ້ຄະແນນສຽງ ຕາມເກນໃນຮອບທີ 2, ລັດຖະ ສະພາຕ້ອງດຳເນີນການລົງຄະ ແນນສຽງຮອບທີ 3; ແຕ່ບໍ່ດົນ ຫຼັງຈາກສະມາຊິກລັດຖະສະພາ ໄດ້ເຂົ້າໄປໃນຫ້ອງໂຖງ, ກໍມີ ການຕໍ່ສູ້ເກີດຂຶ້ນໃນບັນດາພວກ ເຂົາ, ຍ້ອນເຫດນັ້ນ, ທ່ານ ອັນ-ມານດາລາວີ ຕ້ອງເລື່ອນການ ປະຊຸມອອກໄປ.

# 43 ກຸ່ມການເມືອງ ລົງທະບຽນ ເລືອກຕັ້ງໃນເດືອນຕຸລາຢູ່ໂມຊຳບິກ

ຄະນະກຳມະການການ ເລືອກຕັ້ງແຫ່ງຊາດ ຫຼື ຊີເອັນ ອີ (National Elections Commission-CNE) ປະກາດ ເມື່ອວັນສຸກທີ 10 ພຶດສະພາ ຜ່ານມາວ່າ: ກຸ່ມການເມືອງທັງ ໝົດ 43 ກຸ່ມ ທີ່ສະແດງຄວາມ ສົນໃຈເຂົ້າຮ່ວມການເລືອກຕັ້ງ ທົ່ວໄປໃນເດືອນຕຸລາຂອງສາ ທາລະນະລັດໂມຊຳບິກ ໄດ້ຮັບ ອະນຸມັດໂດຍ ຊີເອັນອີ ໃຫ້ລົງ ສະໝັກຮັບເລືອກຕັ້ງໃນການ ເລືອກຕັ້ງທົ່ວໄປທີ່ຈະຈັດຂຶ້ນ ໃນວັນທີ 09 ຕຸລາ 2024.




ການຍື່ນສະໝັກຮັບເລືອກ ຕັ້ງສະມາຊິກສະພາແຫ່ງຊາດ, ສະມາຊິກສະພາແຂວງ ແລະ ເຈົ້າ ແຂວງ ຈະໃຊ້ເວລາ 30 ວັນ, ທ່ານ ເປົາໂລ ຄູນິກາ (Paulo Cuinica) ໂຄສົກຄະນະກຳມະ ການການເລືອກຕັ້ງແຫ່ງຊາດ ກ່າວ ໃນກອງປະຊຸມຖະແຫຼງຂ່າວເພື່ອ ອັບເດດການກຽມພ້ອມສຳລັບ ການເລືອກຕັ້ງໃນເດືອນຕຸລາ.

ທ່ານກ່າວຕື່ມວ່າ "ຊີເອັນ ອີ ໄດ້ຮັບ ແລະ ຮັບຮູ້ການລົງທະ ບຽນຂອງ 43 ກຸ່ມການເມືອງ ທີ່ສະແດງຄວາມສົນໃຈເຂົ້າຮ່ວມ ແຂ່ງຂັນໃນການເລືອກຕັ້ງປີນີ້ ຫຼັງຈາກກວດສອບເອກະສານ ຂອງຜູ້ສະໝັກເພື່ອຮັບປະກັນ ຄວາມຖືກຕ້ອງ, ຕົ້ນສະບັບ ແລະ ຄວາມຄ້າຍຄືກັນຂອງສັນຍະລັກ".

ທ່ານ ຄູນິກາ ໃຫ້ຮູ້ວ່າ: ມາຮອດປັດຈຸບັນ, ຄະນະກຳມະ ການເລືອກຕັ້ງ ໄດ້ລົງທະບຽນ ຜູ້ມີສິດເລືອກຕັ້ງ 16,649,373 ຄົນ ໃນຮອບເລືອກຕັ້ງປັດຈຸບັນ, ລື່ນຄາດໝາຍທີ່ວາງໄວ້.

**ແຫຼ່ງຂ່າວ: ຊິນຮວາ**

# ຊູບິຣິ ປະທານສະພາສູງຟີລິບປິນລາອອກ, ເອສກູເດໂຣ ສາບານຕົນເຂົ້າຮັບຕຳແໜ່ງ


ທ່ານ ຟຣານຊິສ ເອສຄູເດໂຣ

ຕາມເວັບໄຊຂ່າວສານ ຊິນຮວາ, ເມື່ອວັນຈັນທີ 20 ພຶດສະພາຜ່ານມາ, ທ່ານ ຮວນ ມິເກວ ຊູບິຣິ (Juan Miguel Zubiri) ປະທານສະພາສູງຟີລິບປິນ ຢືນຢັນການລາອອກຈາກຕຳແໜ່ງ, ທ່ານ ຟຣານຊິສ ເອສຄູເດໂຣ (Francis Escudero) ໄດ້ສາບານຕົນຂຶ້ນຮັບຕຳແໜ່ງເປັນຫົວໜ້າອົງການນິຕິບັນຍັດຄົນໃໝ່.

ສະມາຊິກສະພາສູງຮວນ ເອັດກາຣ໌ໂດ ອັງກາຣາ (Juan Edgardo Angara) ກ່າວຕໍ່ບັນດານັກຂ່າວວ່າ ສະມາຊິກສະພາສູງ 15 ຈາກທັງໝົດ 24 ທ່ານ ໄດ້ລົງຄະແນນສຽງຂັບໄລ່ທ່ານ ຊູບິຣິ ອອກຈາກຕຳແໜ່ງ.

ຫຼັງຈາກການປ່ຽນແປງຄັ້ງໃຫຍ່, ຄະນະກຳມາທິການສະພາສູງທັງໝົດ ຖືກປະກາດໃຫ້ວ່າງ.

ທ່ານ ເອສຄູເດໂຣ ກ່າວວ່າ ຕົນຍັງຮູ້ສຶກແປກໃຈຕໍ່ສິ່ງທີ່ເກີດຂຶ້ນ, ໂດຍກ່າວເພີ່ມວ່າ ການປ່ຽນແປງຜູ້ນຳຂອງສະພາສູງ ຂຶ້ນຢູ່ກັບຄວາມເຊື່ອໝັ້ນ ຫຼື ຄວາມໄວ້ວາງໃຈຂອງສະມາຊິກສະພາສູງສຽງສ່ວນຫຼາຍ.

ທ່ານ ຊູບິຣິ ເຂົ້າຮັບຕຳແໜ່ງປະທານສະພາສູງ ໃນເດືອນກໍລະກົດ 2022.

# ກໍຣ໌ດານ ແຈນໂດຣໂກວິດ ໄດ້ຮັບເລືອກ ເປັນປະທານລັດຖະສະພາກຣົວຊີອີກສະໄໝ



ໃນວັນພະຫັດທີ16ພຶດສະພາ 2024 ທ່ານ ກໍຣ໌ດານ ແຈນໂດຣໂກວິດ (Gordan Jandrokovic) ໄດ້ຮັບເລືອກເປັນປະທານລັດຖະສະພາກຣົວຊີອີກຄັ້ງ ໃນກອງປະຊຸມຄັ້ງທຳອິດຂອງສະມາຊິກສະພານິຕິບັນຍັດທີ່ຫາກໍໄດ້ຮັບການເລືອກຕັ້ງໃໝ່ ໃນການເລືອກຕັ້ງລັດຖະສະພາເມື່ອວັນທີ17ເມສາຜ່ານມາ, ໂດຍໄດ້ຮັບຄະແນນ 144 ສຽງ ໃນລັດຖະສະພາທີ່ມີ 151 ທີ່ນັ່ງ ກາຍເປັນປະທານລັດຖະສະພາ ສະໄໝທີສາມ.

"ການໄດ້ຮັບຄວາມໄວ້ວາງໃຈເປັນຄັ້ງທີສາມ ຖືເປັນກຽດຢ່າງຍິ່ງ. ຂ້າພະເຈົ້າຂໍສະແດງຄວາມຍິນດີກັບບັນດາຜູ້ແທນທີ່ໄດ້ຮັບການເລືອກຕັ້ງຄືນໃໝ່ອີກຄັ້ງ, ຫຼາຍທ່ານໄດ້ນັ່ງຢູ່ທີ່ນັ່ງຂອງລັດຖະສະພາເປັນເທື່ອທຳອິດ. ຂ້າພະເຈົ້າຫວັງວ່າພວກເຮົາທຸກຄົນຈະໃຊ້ອຳນາດທີ່ຖືກມອບໝາຍດ້ວຍຄຸນນະພາບ." ທ່ານແຈນໂດຣໂກວິດກ່າວຫຼັງຈາກໄດ້ຮັບເລືອກຕັ້ງຄືນໃໝ່.

ທ່ານ ແຈນໂດຣໂກວິດ ເກີດໃນປີ 1967, ມາຈາກສະຫະພັນປະຊາທິປະໄຕກຣົວຊີ (HDZ)ພັກລັດຖະບານຊຸດປັດຈຸບັນ; ໃນເດືອນພຶດສະພາ2017 ທ່ານໄດ້ຮັບເລືອກຕັ້ງເປັນປະທານລັດຖະສະພາຄັ້ງທຳອິດແລະໄດ້ຮັບເລືອກຕັ້ງຄືນໃໝ່ອີກຄັ້ງ ໃນເດືອນກໍລະກົດ 2020.

ໃນລະຫວ່າງການເລືອກຕັ້ງລັດຖະສະພາເມື່ອເດືອນເມສາຜ່ານມາ,ພັກກາງຂວາHDZ ຍາດໄດ້61 ທີ່ນັ່ງ ແລະ ຂະບວນການມາຕຸພູມ (DP) ພັກຝ່າຍຂວາ ໄດ້ 14 ທີ່ນັ່ງ. HDZ ແລະ DP ພ້ອມກັບບັນດາພັກຕົວແທນສຽງສ່ວນໜ້ອຍ ໄດ້ບັນລຸສຽງສ່ວນຫຼາຍໃນລັດຖະສະພາ ຫຼັງຈາກໄດ້ມີການເຈລະຈາຫຼາຍຄັ້ງ.

ລັດຖະສະພາກຣົວຊີເປັນລະບົບສະພາດຽວ (unicameral) ມີ 151 ທີ່ນັ່ງ ແລະ ມີອາຍຸການ 4 ປີ; ລັດຖະສະພາຊຸດຜ່ານມາໄດ້ເລີ່ມໃນເດືອນກໍລະກົດ2020 ແລະ ຖືກຍຸບເມື່ອເດືອນມີນາ 2024.

**ແຫຼ່ງຂ່າວ: ຊິນຮວາ**

# ພັກກຳອຳນາດຂອງໂຕໂກ ຊະນະ ການເລືອກຕັ້ງສະພາພູມິພາກ




ຄະນະກຳມະການການເລືອກຕັ້ງກ່າວເມື່ອຕົ້ນເດືອນພຶດສະພາຜ່ານມາວ່າ ພັກກຳອຳນາດຂອງໂຕໂກ ຊະນະສຽງສ່ວນຫຼາຍໃນການເລືອກຕັ້ງລະດັບພູມິພາກຂອງປະເທດອາຟຣິກາຕາເວັນຕົກແຫ່ງນີ້.

ຕາມຜົນການເລືອກຕັ້ງຊົ່ວຄາວ, ສະຫະພັນເພື່ອສາທາລະນະລັດ (UNIR) ພັກລັດຖະບານຊຸດປັດຈຸບັນຍາດໄດ້137 ຈາກທັງໝົດ 179 ທີ່ນັ່ງ ໃນສະພາພູມິພາກ (regional council), ໃນຂະນະທີ່ຍັງເຫຼືອ 42 ທີ່ນັ່ງ ເປັນຂອງບັນດາພັກຝ່າຍຄ້ານ ແລະ ຜູ້ສະໝັກເອກະລາດ; ຜົນການເລືອກຕັ້ງໄດ້ສົ່ງໄປໃຫ້ສານສູງສຸດ ເຊິ່ງຈະປະກາດຜົນໃນຂັ້ນສຸດທ້າຍ.

ການປ່ອນບັດຄັ້ງນີ້ແມ່ນໄປຄຽງຄູ່ກັບການເລືອກຕັ້ງສະພາແຫ່ງຊາດ ທີ່ຈັດຂຶ້ນໃນວັນທີ 29 ເມສາ 2024 ໂດຍມີຜູ້ສະໝັກຫຼາຍກວ່າ 2,300 ຄົນ ເຂົ້າແຂ່ງຂັນເອົາ113 ທີ່ນັ່ງ; ໃນວັນເສົາທີ 04 ພຶດສະພາຜ່ານມາ, ຄະນະກຳມະການການເລືອກຕັ້ງເອກະລາດແຫ່ງຊາດ ລາຍງານວ່າ ພັກ UNIR ໄດ້ 108 ທີ່ນັ່ງ, ໃນຂະນະທີ່ 4 ພັກຝ່າຍຄ້ານໄດ້ 5 ທີ່ນັ່ງ.

ຕາມທີ່ທ່ານ ດາໂກ ຢາເບຣ (Dago Yabre) ປະທານຄະນະກຳມະການການເລືອກຕັ້ງກ່າວ, ມີຜູ້ມີສິດເລືອກຕັ້ງທີ່ລົງທະບຽນ ປະມານ 4.2 ລ້ານຄົນ, ໃນຂະນະທີ່ຜູ້ອອກມາໃຊ້ສິດລົງຄະແນນສຽງປະມານ61 ເປີເຊັນ.

**ແຫຼ່ງຂ່າວ: ຊິນຮວາ**



## ຄະນະຜູ້ແທນ...

(ຕໍ່ຈາກໜ້າ 1)

ຊາຊົນທົ່ວປະເທດຈີນ ແລະ ຄະນະ ໄດ້ເຂົ້າຢ້ຽມຂໍ່ານັບສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່, ປະທານປະເທດແຫ່ງ ສປປ ລາວ ທີ່ຫ້ອງວ່າການສູນກາງພັກ ແລະ ສະຫາຍ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດທີ່ຫໍສະພາແຫ່ງຊາດ ດ້ວຍບັນຍາກາດໄມຕີຈິດມິດຕະພາບອັນອົບອຸ່ນຖານສະຫາຍອ້າຍນ້ອງ ເຊິ່ງຄະນະຜູ້ແທນກໍໄດ້ຮັບຊາບຕື່ມກ່ຽວກັບສະພາບການຕ່າງໆຂອງສປປລາວ ແລະ ຕີລາຄາສູງຕໍ່ການຢ້ຽມຢາມ ເຊິ່ງເປັນການເສີມຂະຫຍາຍສາຍພົວພັນຮ່ວມມື ລາວ-ຈີນ ໂດຍສະເພາະແມ່ນການພົວພັນລະຫວ່າງສອງອົງການນິຕິບັນຍັດຂອງສອງປະເທດ ໃຫ້ສືບຕໍ່ຂະຫຍາຍຕົວ, ປະກອບສ່ວນເຂົ້າໃນການຈັດຕັ້ງຜັນຂະຫຍາຍແຜນການຮ່ວມມື ລາວ-ຈີນ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດເຂົ້າສູ່ລວງເລິກກວ່າເກົ່າ ຕາມພາລະບົດບາດຂອງສອງອົງການນິຕິບັນຍັດ, ພິເສດ ການຊຸກຍູ້ຕິດຕາມກວດກາຄວາມຄືບໜ້າຂອງບັນດາໂຄງການຮ່ວມມືຕ່າງໆທີ່ສອງລັດຖະບານໄດ້ຕົກລົງຮ່ວມກັນແລ້ວນັ້ນ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດດ້ວຍປະສິດທິຜົນ.

ຕອນເຊົ້າຂອງວັນດຽວກັນ, ສະຫາຍ ສູຍເຄີລາຍທີ ຈາເຄີເອີແລະຄະນະໄດ້ພົບປະສອງຝ່າຍກັບສະຫາຍ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ແລະ ຄະນະ ເຊິ່ງສອງຝ່າຍໄດ້ຕີລາຄາຄືນການພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດລາວ ແລະ ສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ໃນໄລຍະຜ່ານມາ ແລະ ປຶກສາຫາລືການພົວພັນຮ່ວມມືກັນໃນຕໍ່ໜ້າ; ພ້ອມດຽວກັນນີ້, ສອງຝ່າຍໄດ້ແລກປ່ຽນບົດຮຽນ ແລະ ປະສົບການໃນການປະຕິບັດໜ້າທີ່ ແລະ ພາລະບົດບາດຂອງອົງການນິຕິບັດຍັດ, ບົດຮຽນກ່ຽວກັບການແກ້ໄຂສະພາບຄວາມຫຍຸ້ງຍາກຂອງເສດຖະກິດການເງິນ, ບົດຮຽນກ່ຽວກັບກົງຈັກ-ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ແລະ ບົດຮຽນການເຄື່ອນໄຫວໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.

ໃນໄລຍະມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ ຄັ້ງນີ້, ຄະນະຜູ້ແທນສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ຍັງໄດ້ໄປຢ້ຽມຢາມ ແລະ ເຮັດວຽກທີ່ແຂວງຫຼວງພະບາງ ເຊິ່ງໄດ້ພົບປະກັບສະຫາຍ ຄຳຂັນ ຈັນທະວິສຸກເຈົ້າແຂວງຫຼວງພະບາງ, ຢ້ຽມຢາມບັນດາໂຄງການລົງທຶນ ແລະ ຊ່ວຍເຫຼືອ ຂອງ ສປ ຈີນ ຢູ່ສປປລາວເຊັ່ນ: ເຂື່ອນໄຟຟ້ານໍ້າອູ1, ສະຖາບັນຂົງຈື້ຢູ່ມະຫາວິທະຍາໄລສຸພານຸວົງ, ເຂດພັດທະນາກອມລອມໄຊເສດຖາ, ບໍລິສັດ ທາງລົດໄຟລາວ-ຈີນ ຈຳກັດ ແລະ ຢ້ຽມຢາມຫໍພິພິດທະພັນຫຼວງພະບາງ, ຫໍພິພິທະພັນປະທານ ໄກສອນ ພົມວິຫານ, ພິພິທະພັນວັດສີສະເກດ, ບໍລິສັດ EDL-T ແລະ ພື້ນຖານວັດທະນະທຳຈຳນວນໜຶ່ງຢູ່ແຂວງຫຼວງພະບາງ ແລະ ນະຄອນຫຼວງວຽງຈັນ.

**(ອານຸສອນ ພູມມີທອນ)**

ເຝົ້າໄວ້ ໄດ້ບົດຮຽນ
❖ ວິເສດ ສະແຫວງສຶກສາ

# ລະວັງຕົກເປັນເຫຍື່ອ ການສໍ້ໂກງທາງອອນລາຍ!

ຂ່າວຕ່າງປະເທດໃນວັນທີ 10 ເມສາປີນີ້ ໄດ້ໃຫ້ຮູ້ກ່ຽວກັບຄະດີຫຼອກລວງທາງອອນລາຍໃນຂະແໜງການຄ້າທາງເອເລັກໂຕຣນິກທີ່ປະເທດສິງກະໂປ ໂດຍໄດ້ຊີ້ບອກວ່າ ໃນປີ 2023, ຄະດີຫຼອກລວງສໍ້ໂກງໃນຂະແໜງອີຄອມເມີດສ (E-Commerce) ຫຼື ການຄ້າຜ່ານລະບົບເອເລັກໂຕຣນິກຢູ່ສິງກະໂປນັ້ນໄດ້ມີເຖິງ 9,783 ເລື່ອງ, ເພີ່ມຂຶ້ນຈາກຈຳນວນ 4,762 ຄະດີ ໃນປີ 2022. ຄະດີຫຼອກລວງທີ່ວ່ານັ້ນ ເກືອບ 50% ແມ່ນເຮັດຜ່ານເຟດບຸກ (Facebook) ຄືມີເຖິງ 4,550 ຄະດີທຽບກັບ 1,138 ຄະດີໃນປີ 2022. ຂ່າວບອກວ່າ ເຈົ້າການໃນການສຳຫຼວດ ແລະ ຈັດລະດັບນີ້ ແມ່ນກະຊວງກິດຈະການພາຍໃນຂອງສິງກະໂປ ໂດຍລົງເລິກຂະແໜງການຊື້-ຂາຍ ຜ່ານ E-Commerce. ການສຳຫຼວດ ແລະ ຈັດລະດັບນັ້ນ ອີງໃສ່ 4 ໝວດຂອງຕົວຊີ້ບອກ (ຊີ້ວັດ) ຄືລະດັບຄວາມເຊື່ອຖືໄດ້ຂອງຜູ້ໃຊ້ງານ, ຄວາມປອດໄພຂອງການເຮັດທຸລະກຳ, ລະດັບຄວາມພ້ອມ ຂອງວິທີແກ້ໄຂ ໃນກໍລະນີເກີດມີຄວາມເສຍຫາຍ ແລະ ສຸດທ້າຍແມ່ນປະສິດທິພາບ ຂອງມາດຕະການຕ້ານການຫຼອກລວງ ສໍ້ໂກງໃນເວັບໄຊຊື້-ຂາຍສິນຄ້າ.

ເຄື່ອງມືວັດແທກຄວາມສຸກລະດັບປະເທດໃນຍຸກປັດຈຸບັນ ມັກຈະມີຂ່າວອອກມາເລື້ອຍໆ ກ່ຽວການຈັດລະດັບຄວາມສຸກ, ຄວາມໂປ່ງໃສ, ຄວາມສະອາດຂອງຕົວເມືອງ, ນະຄອນ ຕະຫຼອດຮອດລະດັບປະເທດ; ນອກນັ້ນ, ກໍມີການຈັດລະດັບອື່ນໆເຊັ່ນ: ຕົວເມືອງ (ປະເທດ) ຍອດນິຍົມ ສຳລັບນັກທ່ອງທ່ຽວ, ປະເທດທີ່ມີເງື່ອນໄຂເຮັດທຸລະກິດຢ່າງສະດວກສະບາຍ ແລະ ອື່ນໆ. ການຕີລາຄາ ຫຼື ວັດແທກດັ່ງກ່າວນິຍົມເຮັດເປັນລາຍປີ. ຢູ່ລາວພວກເຮົາກໍມີຫຼາຍຕົວເມືອງ, ຫຼາຍທ້ອງຖິ່ນທີ່ໜ່ວຍງານພາກພື້ນ ແລະ ສາກົນ ໄດ້ຕີລາຄາໃຫ້ຄະແນນເປັນຕົວເມືອງສະອາດຂອງອາຊຽນ (ຫຼວງພະບາງ), ເປັນປະເທດຍອດນິຍົມສຳລັບນັກທ່ອງທ່ຽວ ແລະ ອື່ນໆ; ພ້ອມດຽວກັນນັ້ນ, ກໍຍັງມີການຈັດລະດັບປະເທດທີ່ທຸກຍາກທີ່ສຸດ, ປະເທດທີ່ການສໍ້ລາດບັງຫຼວງຫຼາຍທີ່ສຸດແລະອີກສາລະພັດແນວຕີລາຄາ. ແນ່ນອນຄະແນນຕີລາຄາແບບຫຼັງໆນີ້ ຍ່ອມສົ່ງຜົນກະທົບຕໍ່ພາບພົດ, ການລົງທຶນ ກໍຄືການດຶງດູດນັກທ່ອງທ່ຽວ ຖ້າໄດ້ຮັບຄະແນນເປັນປະເທດ "ຍອດສໍ້ລາດບັງຫຼວງ" ແລ້ວກໍຄົງບໍ່ມີໃຜຢາກໄປທ່ອງທ່ຽວ-ໄປລົງທຶນ ໃນປະເທດດັ່ງກ່າວ.

ດັ່ງນັ້ນ, ການສ້າງພາບພົດລວມທີ່ດີຈຶ່ງມີຄວາມສຳຄັນຫຼາຍ ບໍ່ວ່າຈະເປັນລະດັບປະເທດ ກໍຄືທ້ອງຖິ່ນ. ສ່ວນການຕີລາຄາຄຸນນະພາບການທ່ອງທ່ຽວທີ່ດີນັ້ນ ເຂົາມັກຈະເນັ້ນເງື່ອນໄຂດັ່ງຕໍ່ໄປນີ້: ຄວາມສະດວກສະບາຍໃນການຂໍວີຊາເຂົ້າ-ອອກປະເທດ ເຊັ່ນ: ປອດວີຊາ, ບໍ່ເກັບຄ່າວີຊາ, ຄ່າວີຊາຖືກ, ການໃຫ້ວີຊາກັບດ່ານ, ອາຍຸໃຊ້ງານຂອງວີຊາໄດ້ດົນ, ສາມາດເຂົ້າເຖິງບ່ອນທ່ອງທ່ຽວໄດ້ງ່າຍ, ຄົນທ້ອງຖິ່ນໃນສະຖານທີ່ທ່ອງທ່ຽວມີນິດໄສດີ ຮັກແຂກບ້ານແຂກເມືອງ, ຄ່າອາຫານ-ທີ່ພັກມີລາຄາຖືກ ແລະ ອື່ນໆ. ສ່ວນມາດຕະຖານໃນການວັດແທກວ່າປະເທດໃດປະເທດໜຶ່ງ ມີຄວາມສຸກທີ່ສຸດ (ລະດັບພາກພື້ນ-ລະດັບໂລກ) ນັ້ນ ເພິ່ນອີງໃສ່ໂຕຊີ້ວັດດັ່ງຕໍ່ໄປນີ້: ຄວາມພໍໃຈຂອງພົນລະເມືອງຕໍ່ຊີວິດການເປັນຢູ່ຂອງຕົນ, ຍອດຜະລິດຕະພັນພາຍໃນຕໍ່ຫົວຄົນຢູ່ໃນເກນດີ, ມີການສະໜັບສະໜູນທາງສັງຄົມ, ອາຍຸສະເລ່ຍຍາວ, ມີອິດສະຫຼະພາບ, ຄວາມເອື້ອເຟື້ອເພື່ອແຜ່ໃນສັງຄົມ, ບໍ່ມີການສໍ້ລາດບັງຫຼວງ ຫຼື ມີໃນລະດັບຕໍ່າ, ຄວາມໄວ້ວາງໃຈສູງຂອງພົນລະເມືອງ ຕໍ່ການບໍລິການຂອງໜ່ວຍງານຂອງລັດ, ການເບິ່ງແຍງສຸຂະພາບ, ການສຶກສາບໍ່ເສຍຄ່າ ແລະ ອື່ນໆ ປະເທດທີ່ໄດ້ຮັບຄະແນນເປັນອັນດັບທີ 1 ດ້ານຄວາມສຸກລະດັບໂລກໃນປັດຈຸບັນ ແມ່ນປະເທດ ແຟງລັງ ຫຼື ຟິນແລນ.

ທະນາຄານພັດທະນາລາວ
LDB Bank




#ບ່າວກະບື

ນາງ ແຈ່ມ: "ເມື່ອຜີສອງໂຕມາພົບກັນ ພວກມັນຊິຖາມກັນວ່າແນວໃດ?"

ນາງດວນ: "ເຈົ້າກໍເຊື່ອຄົນຢູ່ບໍ່".

#BAOKBU

Miss Chaem: "What does one ghost say to the other ghost when they meet?"

Miss Duane: "Do you believ in people"



## ເຜີຍແຜ່...

(ຕໍ່ຈາກໜ້າ 1)

ຊາດ ໂດຍການເປັນປະທານຂອງສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ; ມີບັນດາສະຫາຍຄະນະບໍລິຫານງານພັກ, ຄະນະພັກຮາກຖານ, ໜ່ວຍພັກຮາກຖານ, ໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ, ສະມາຊິກພັກສົມບູນ ແລະ ສຳຮອງ ພ້ອມດ້ວຍພະນັກງານ-ລັດຖະກອນທົ່ວ ສພຊ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງການເຜີຍແຜ່ເຊື່ອມຊຶມບົດໂອ້ລົມຂອງສະຫາຍເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ແຫ່ງ ສປປ ລາວ ຕໍ່ກອງປະຊຸມສະຫຼຸບວຽກງານການເງິນທົ່ວປະເທດປະຈຳປີ 2023 ແລະ ທິດທາງປີ 2024; ເຜີຍແຜ່ມະຕິກົມການເມືອງສູນກາງພັກວ່າດ້ວຍການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງໃນໄລຍະໃໝ່. ນອກນັ້ນ, ກອງປະຊຸມຍັງໄດ້ຕີລາຄາຂະບວນການສ້າງພັກປອດໃສ, ເຂັ້ມແຂງ, ໜັກແໜ້ນແລະໄດ້ຜ່ານມະຕິວ່າດ້ວຍການຮັບຮອງເອົາການຈັດປະເພດໜ່ວຍພັກ, ສະມາຊິກພັກ ແລະ ໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ພາຍໃນອົງຄະນະພັກສະພາແຫ່ງຊາດ ປະຈຳປີ 2023 ໂດຍໄດ້ຈັດພິທີມອບ-ຮັບໃບຢັ້ງຢືນໃຫ້ແກ່ໜ່ວຍພັກທີ່ຖືກຮັບຮອງເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຈຳນວນ 15 ໜ່ວຍ ໃນ 18 ໜ່ວຍທີ່ຂຶ້ນກັບຄະນະພັກສະພາແຫ່ງຊາດ; ຕາງໜ້າຮາກຖານພັກ ກໍໄດ້ຂຶ້ນຈັບມືແຂ່ງຂັນເພື່ອສືບຕໍ່ແຂ່ງຂັນສ້າງພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃນປີ 2024 ພ້ອມທັງກ່າວຄຳປະຕິຍານຕໍ່ກອງປະຊຸມ.

ສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ສະແດງຄວາມຊົມເຊີຍຕໍ່ຜົນງານທີ່ບັນດາສະຫາຍສະມາຊິກພັກຍາດໄດ້ໃນປີໜຶ່ງທີ່ຜ່ານມາ ໃນຂະບວນການສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນແລະມີຄຳເຫັນໂອ້ລົມຕໍ່ກອງປະຊຸມ ໂດຍໄດ້ເນັ້ນໜັກບັນດາຄະນະພັກຮາກຖານ ສືບຕໍ່ເອົາໃຈໃສ່ວຽກງານສຶກສາອົບຮົມແນວຄິດການເມືອງໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນ ສືບຕໍ່ມີຄວາມໜັກແໜ້ນດ້ານທັດສະນະການເມືອງ, ມີຄວາມອົດທົນຕໍ່ກັບສະພາບທີ່ຫຍຸ້ງຍາກ, ມີຄວາມຕັດສິນໃຈເຮັດລ້ອນໜ້າທີ່ ແລະ ສືບຕໍ່ຮັກສາຄວາມສາມັກຄີເປັນເອກະພາບພາຍໃນ, ໃນຂະບວນການສ້າງພັກປອດໃສ, ເຂັ້ມແຂງ, ໜັກແໜ້ນເປັນວຽກທີ່ຈະຕ້ອງໄດ້ສືບຕໍ່ເອົາໃຈໃສ່ຂອງບັນດາຮາກຖານພັກທີ່ຂຶ້ນກັບຄະນະບໍລິຫານງານພັກສະພາແຫ່ງຊາດ ເພື່ອສືບຕໍ່ປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ IV ຂອງອົງຄະນະພັກ ຕິດພັນກັບການປະຕິບັດ 5 ແຜນງານ, 29 ໂຄງການ ທີ່ກອງປະຊຸມໃຫຍ່ໄດ້ຮັບຮອງເອົານັ້ນໃຫ້ປາກົດຜົນເປັນຈິງ; ເອົາໃຈໃສ່ວຽກງານປະສານງານພາຍໃນຄະນະໜ່ວຍພັກຮາກຖານ ກໍຄືການປະສານງານຂອງຄະນະຊ່ວຍວຽກພັກສະພາແຫ່ງຊາດ; ເປັນເຈົ້າການນຳພາ-ຊີ້ນຳບັນດາໜ່ວຍພັກຮາກຖານ ເຮັດສຳເລັດໜ້າທີ່ການເມືອງຂອງຕົນ ເຊິ່ງໃນປີນີ້ ສະພາແຫ່ງຊາດຈະເປັນເຈົ້າພາບກອງປະຊຸມໄອປາ ຄັ້ງທີ 45 ຈຶ່ງພ້ອມກັນປຸ້ມລຸມກັນເປັນເຈົ້າພາບທີ່ດີ, ສະເພາະໜ້ານີ້ ແມ່ນການກະກຽມໃຫ້ແກ່ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

**(ຂ່າວ: ອານຸສອນ ພູມມີທອນ, ພາບ: ສອນສັກ ວັນວິໄຊ)**

TE SOLE

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ